# ຄຳແນະນຳກ່ຽວກັບບົດສະເໜີຂໍທຶນຈາກກອງທຶນໂລກ ເພື່ອຕອບໂຕ້ຕໍ່ພະຍາດໂຄວິດ 19

ສ້າງຂຶ້ນວັນທີ: 6 ເມສາ 2021
ປັບປຸງວັນທີ: 6 ເມສາ 2021

## ຄຳແນະນຳ

ຄຳແນະນຳນີ້ແມ່ນມີຈຸດປະສົງ ເພື່ອແນະນຳຜູ້ສະໝັກທີ່ມີເງື່ອນໄຂສາມາດປະກອບແບບຟອມບົດສະເໜີຂໍທຶນຕອບໂຕ້ຕໍ່ COVID-19. ຄຳແນະນຳນີ້ຄວນອ່ານຮ່ວມກັບຄູ່ມືການຕອບໂຕ້ຕໍ່ COVID-19 (ເບິ່ງຂໍ້ມູນອ້າງອີງຕໍ່ໄປນີ້).

"ຜູ້ສະໝັກທີ່ມີສິດໄດ້ຮັບທຶນ" ແມ່ນທຸກໆປະເທດ, ລວມທັງຜູ້ທີ່ໄດ້ຮັບທຶນໃນພາກພື້ນ/ຮ່ວມຫຼາຍປະເທດ[1], ເຊິ່ງປະຈຸບັນໄດ້ຮັບທຶນຊ່ວຍເຫຼືອຈາກກອງທຶນໂລກ. ບົດສະເໜີຂໍທຶນຕອບໂຕ້ພະຍາດຕໍ່ COVID-19 ທຸກໆສະບັບຕ້ອງໄດ້ຮັບການຮັບຮອງ ແລະ ຍື່ນໂດຍ CCMs (RCMs/RO ຕາມສະຖານະການຕົວຈິງທີ່ມີຫລາຍໆປະເທດ) ຫລື ຕາມທີ່ໄດ້ລະບຸໄວ້ໃນໜັງສືອ່າດ້ອຍການຈັດສັນ C19RM ສຳລັບທີ່ບໍ່ແມ່ນພາກສ່ວນ CCM/RCM/RO. ນອກຈາກນັ້ນ, ທຸກໆບົດສະເໜີຂໍທຶນແບບດ່ວນເພື່ອຕອບໂຕ້ຕໍ່ C19RM ແລະ ກິດຈະກຳການຄວບຄຸມ ແລະ ສະກັດກັ້ນ COVID-19 ຂອງ C19RM ຕ້ອງໄດ້ຮັບຮອງຈາກ ຄະນະກຳມະການປະສານງານຕອບໂຕ້ຕໍ່ COVID-19 ແຫ່ງຊາດ.

ທຶນສຳລັບ C19RM ຈະຖືກນຳໃຊ້ເຂົ້າໃນກິດຈະກຳດັ່ງຕໍ່ໄປນີ້:

i. ກິດຈະກຳການຄວບຄຸມ ແລະ ສະກັດກັ້ນ COVID-19, ລວມທັງອຸປະກອນປ້ອງກັນຕົວ (PPE), ການບົ່ງມະຕິ, ການປິ່ນປົວ, ການສື່ສານ ແລະ ມາດຕະການສາທາລະນະອື່ນໆຕາມທີ່ໄດ້ກຳນົດໄວ້ໃນຄຳແນະນຳຂອງອົງການອະນາໄມໂລກ (WHO);

ii. ມາດຕະການຫຼຸດຜ່ອນຄວາມສ່ຽງທີ່ກ່ຽວຂ້ອງກັບ COVID-19 ສຳລັບແຜນງານເພື່ອຕ້ານໂລກເອດສ໌, ວັນນະໂລກ ແລະ ໄຂ້ຍຸງ, ລວມທັງ, ແຕ່ບໍ່ຈຳກັດພຽງເທົ່ານີ້, ການສະໜັບສະໜູນກິດຈະກຳຕ່າງໆຂອງ COVID-19 ທີ່ເຫັນວ່າມີຄວາມຈຳເປັນເພື່ອຮັບປະກັນການຈັດຕັ້ງປະຕິບັດການໂຄສະນາກິດຈະກຳຂອງວຽກງານຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ ຢູ່ໃນລະດັບຊຸມຊົນແລະສຸກສາລາ, ຄ່າໃຊ້ຈ່າຍໃນການຈັດສົ່ງ ແລະ ການຈັດຊື້ເພີ່ມເຕີມສຳລັບວຽກງານຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ ຢູ່ບ່ອນທີ່ມີຊ່ອງຫວ່າງໃນການແກ້ໄຂບັນຫາຂອງ COVID-19;

iii. ເພີ່ມທະວີການເສີມສ້າງຂົງເຂດທີ່ສຳຄັນຂອງລະບົບສາທາລະນະສຸກເຊັ່ນ: ເຄືອຂ່າຍຫ້ອງທົດລອງ, ຕ່ອງໂສ້ການສະໜອງ ແລະ ລະບົບຕອບໂຕ້ທີ່ຊຸມຊົນເປັນຜູ້ນຳພາ, ເພື່ອຊ່ວຍໃນການແກ້ໄຂບັນຫາກ່ຽວກັບການຂໍການສະໜັບສະໜູນ, ການບໍລິການ, ຄວາມຮັບຜິດຊອບ ແລະ ວິທີການອື່ນໆໂດຍອີງໃສ່ສິດທິມະນຸດ.

ທຶນສະໜັບສະໜູນ C19RM ບໍ່ສາມາດສະໜັບສະໜູນການຈັດຊື້ວັກຊີນ ຫຼື ສຸມໃສ່ການຈັດຕັ້ງປະຕິບັດວັກຊີນ. ຄູ່ມື ແລະ ຄຳແນະນຳດ້ານວິຊາການກ່ຽວກັບ C19RM (ເບິ່ງຂໍ້ມູນອ້າງອີງຕໍ່ໄປນີ້) ໄດ້ມີຄຳແນະນຳເພີ່ມເຕີມກ່ຽວກັບເລື່ອງນີ້. ໃນຂະນະທີ່ນຳໃຊ້ທຶນ C19RM ເພື່ອຈັດຊື້ PPE ແລະ ກິດຈະກຳກ່ຽວກັບລະບົບສາທາລະນະສຸກຈຳນວນໜຶ່ງ (ເຊັ່ນການສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານສາທາລະນະສຸກໃນຂັ້ນຊຸມຊົນ) ອາດຈະປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນການສັກຢາວັກຊີນພາຍໃນປະເທດ, GAVI ແລະ ທະນາຄານໂລກ (WB) ເປັນກຳລັງຫຼັກຂອງການສະໜັບສະໜູນຈາກພາຍນອກໃນການຈັດຕັ້ງປະຕິບັດວຽກງານການໃຫ້ວັກຊີນພາຍໃນປະເທດ.

ບົດສະເໜີຂໍທຶນ C19RM ຄວນສ້າງໂດຍອີງໃສ່ຂໍ້ມູນສະບັບລ້າສຸດທີ່ມີຢູ່ ແລະ ໃຫ້ປະຕິບັດຕາມຄຳແນະນຳ ແລະ ສອດຄ່ອງກັບ: (ກ) ແຜນຍຸດທະສາດແຫ່ງຊາດໃນການກະກຽມຄວາມພ້ອມ ແລະ ຕອບໂຕ້ຕໍ່ COVID-19 (NSPRP) (ຄາດວ່າຈະມີຢູ່ໃນທຸກປະເທດ ແລະ ຕ້ອງມີສະບັບປັບປຸງສະເພາະໃນປີ 2021); (ຂ) ຄຳແນະນຳດ້ານວິຊາການຂອງກອງທຶນໂລກ; ແລະ (ຄ) ຄູ່ມືແນະນຳຂອງ WHO (ລວມທັງ COVID-19). ຄາດວ່າທຶນສະໜັບສະ

[1] ການສະໜັບສະໜູນໃດໜຶ່ງຂອງກອງທຶນໂລກສຳລັບບັນດາປະເທດທີ່ບໍ່ໄດ້ຮັບທຶນຈາກກອງທຶນໂລກໂດຍກົງ ແຕ່ເປັນສ່ວນໜຶ່ງໃນທຶນຊ່ວຍເຫຼືອລວມຫຼາຍປະເທດ, ຈະຖືກກຳນົດໂດຍກອງທຶນໂລກໂດຍອີງຕາມແຕ່ລະກໍລະນີ.

ໝູນ C19RM ນີ້ຈະເປັນທຶນເພີ່ມເຕີມໃສ່ກັບທຶນທີ່ມີຢູ່ພາຍໃນປະເທດ ແລະ ບໍ່ຄວນນໍາໃຊ້ແທນທີ່ບ້ວງທຶນທີ່ມີຢູ່, ຈະແມ່ນທຶນສໍາລັບວຽກງານຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ ຫຼື ທຶນເພື່ອນໍາໃຊ້ເຂົ້າໃນວຽກງານ COVID-19.

ບົດສະເໜີຂໍທຶນ C19RM ໄດ້ຮັບການປັບປຸງຕາມຄວາມເໝາະສົມໂດຍຜ່ານການປຶກສາຫາລືກັບຫຼາຍຂະແໜງການ ແລະ ມີການຕັດສິນໃຈຮ່ວມກັນເຊິ່ງມີຄວາມສໍາຄັນຕໍ່ການຫຼຸດຜ່ອນຜົນກະທົບຂອງ COVID-19. ຜູ້ສະໝັກຂໍທຶນຕ້ອງໃຫ້ມີສ່ວນຮ່ວມຂອງຊຸມຊົນ ແລະ ການຈັດຕັ້ງທາງສັງຄົມ ລວມທັງບັນດາຊຸມຊົນທີ່ໄດ້ຮັບຜົນກະທົບໜັກຈາກ COVID-19 ແລະ ຮັບປະກັນໃຫ້ມີການປະສານງານຮ່ວມກັບຄະນະກໍາມະການປະສານງານຕອບໂຕ້ຕໍ່ COVID-19 ແຫ່ງຊາດ. ການປັບປຸງບົດສະເໜີຂໍທຶນ C19RM ປະກອບມີການພິຈາລະນາການເຂົ້າຮ່ວມຂອງຊຸມຊົນ, ກິດຈະກໍາທີ່ກ່ຽວຂ້ອງກັບສິດທິ ແລະ ບົດບາດຍິງຊາຍ. ເພື່ອໃຫ້ສອດຄ່ອງກັບຫຼັກການພື້ນຖານຂອງຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ສິດທິມະນຸດຕາມລະບຽບການຂອງກອງທຶນໂລກ, ບົດສະເໜີຂໍທຶນຕ້ອງຕິດພັນກັບຄວາມຈໍາເປັນທີ່ຈະນໍາໃຊ້ທຶນເຂົ້າໃນວຽກງານຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ ແລະ ວິທີການນໍາໃຊ້ທຶນດັ່ງກ່າວເຂົ້າໃນກິດຈະກໍາທີ່ຕ້ອງການ.

ສໍາລັບການເສີມສ້າງລະບົບສາທາລະນະສຸກ ແລະ ຊຸມຊົນ ແລະ ການຕອບໂຕ້, ບັນດາຄູ່ຮ່ວມງານຈະມີສ່ວນຮ່ວມໂດຍຜ່ານ ACT-Accelerator ຕົວເຊື່ອມຕໍ່ລະບົບສຸຂະພາບ ໂດຍມີຄູ່ຮ່ວມມືຫຼາຍຝ່າຍທີ່ສໍາຄັນລວມທັງ WB (ລວມທັງ GFF), WHO, GAVI, UNICEF ພ້ອມທັງຄູ່ຮ່ວມມືຫຼາຍຝ່າຍ ແລະ ສອງຝ່າຍທີ່ສໍາຄັນອື່ນໆເຊັ່ນ: Stop TB Partnership, USAID, FCDO, GIZ BACKUP Health, L'Initiative ແລະ AFD.

ຂໍ້ແນະນໍາດ້ານວິຊາການໃນຂົງເຂດນີ້ ຈະສຸມໃສ່ການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບສາທາລະນະສຸກ ແລະ ຊຸມຊົນ ແລະ ການຕອບໂຕ້ ເພື່ອໃຫ້ສາມາດຕອບໂຕ້ຕໍ່ COVID-19 ແລະ ສົ່ງເສີມການເຂົ້າເຖິງການບໍລິການວຽກງານຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ. ເນື່ອງຈາກວ່າການລົງທຶນໃນລະບົບສາທາລະນະສຸກສາມາດມີຜົນປະໂຫຍດນອກເໜືອຈາກວິກິດການທັນທີເຊິ່ງຈະຂະຫຍາຍໄປສູ່ການກຽມພ້ອມຢ່າງກວ້າງຂວາງຕໍ່ການແຜ່ລະບາດໃນອະນາຄົດ, ຂໍ້ແນະນໍາດ້ານວິຊາການຄວນສອດຄ່ອງກັບໂຄງສ້າງຂອງການກະກຽມ ແລະ ການຕອບໂຕ້ໃນທົ່ວໂລກ, ເຄື່ອງມື ແລະ ຕົວຊີ້ວັດທີ່ມີຢູ່ແລ້ວ[2].

ກອງທຶນໂລກຈະສົ່ງໜັງສືວ່າດ້ວຍການຈັດສັນທຶນ C19RM ໃຫ້ຜູ້ສະໝັກແຕ່ລະພາກສ່ວນເພື່ອຢືນຢັນຈໍານວນທຶນສໍາລັບ C19RM ທີ່ມີໃຫ້ແກ່ຜູ້ສະໝັກ (ການຈັດສັນທຶນໂດຍພື້ນຖານຂອງ C19RM -Base Allocation). ຈໍານວນເງິນດັ່ງກ່າວຈະເປັນຈໍານວນເພີ່ມເຕີມໃຫ້ແກ່ການຈັດສັນປີ 2017-2019 ແລະ 2020-2022 ແລະ ທຶນ C19RM ທີ່ໄດ້ຮັບມາຮອດປະຈຸບັນ (ອີງຕາມຄວາມເໝາະສົມໃນແຕ່ລະບ່ອນ). ນອກຈາກນັ້ນ, ໃຫ້ຜູ້ສະໝັກຍື່ນຂໍທຶນເພີ້ມເຕີມຂອງ C19RM – Above Base Allocation ນອກຈາກທຶນທີ່ໄດ້ຈັດສັນໂດຍພື້ນຖານ ເຊິ່ງຈະຖືກທົບທວນ ແລະ ຖ້າຫາກວ່າໄດ້ຮັບການອະນຸມັດກໍອາດຈະໄດ້ຮັບທຶນໃນທັນທີ (ອາດຈະໄດ້ຮັບເຕັມຈໍານວນທີ່ຂໍ ຫຼື ອາດຈະໄດ້ຮັບພຽງແຕ່ສະເພາະບາງກິດຈະກໍາ) ຫຼື ອາດຈະລົງທະບຽນເປັນທຶນ C19RM ທີ່ຍັງບໍ່ທັນໄດ້ຮັບການຕອບສະໜອງເທື່ອ. ຜູ້ສະໝັກຈະໄດ້ຮັບເອກະສານໃນການປະກອບບົດສະເໜີຂໍທຶນຈາກຄະນະທີມງານກອງທຶນໂລກ. ຜູ້ສະໝັກຕ້ອງເຮັດວຽກຮ່ວມກັບທີມງານກອງທຶນໂລກ ເພື່ອກໍານົດເວລາໃນການຍື່ນບົດສະເໜີຂໍທຶນ C19RM ຂອງຕົນຕາມຄວາມເໝາະສົມທີ່ສຸດ ແລະ ລົງທະບຽນຕາມເວລາທີ່ໄດ້ເລືອກໂດຍຕິດຕໍ່ C19RM@theglobalfund.org ພາຍໃນສອງອາທິດຫຼັງຈາກໄດ້ຮັບໜັງສືວ່າດ້ວຍການຈັດສັນທຶນ C19RM.

[2] ຕົວຢ່າງຂອງເອກະສານທີ່ກ່ຽວຂ້ອງລວມມີ: ກົດລະບຽບສາທາລະນະສຸກສາກົນ (IHR), ການປະເມີນຜົນຮ່ວມພາຍນອກດ້ານການປະກັນສຸຂະພາບທົ່ວໂລກ, ມາດຕະຖານຄວາມສາມາດຂອງ WHO (ປີ 2019) ແລະ ແຜນປະຕິບັດການປະກັນສຸຂະພາບງານແຫ່ງຊາດ, ຖ້າມີ

ຜູ້ສະໝັກສາມາດຂໍທຶນ C19RM ໄດ້ເປັນສອງໄລຍະ:

1. ບົດສະເໜີຂໍທຶນ C19RM ແບບດ່ວນ: ຜູ້ສະໝັກສາມາດຍື່ນບົດສະເໜີຂໍທຶນ C19RM ໃນເບື້ອງຕົ້ນເພື່ອເລັ່ງການສະໜັບສະໜູນຄວາມຕ້ອງການອັນຮີບດ່ວນສໍາລັບຜະລິດຕະພັນສຸຂະພາບ COVID-19 (ລວມທັງ PPE, ການບົ່ງມະຕິ ແລະ ການປິ່ນປົວ ດັ່ງທີ່ໄດ້ກໍານົດໄວ້ໃນໝວດທີ່ດີທີ່ສຸດພາຍໃນກອບວຽກງານຜະລິດຕະພັນສຸຂະພາບ (ເບິ່ງຂໍ້ມູນອ້າງອີງຕໍ່ໄປນີ້) ພ້ອມທັງຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການນໍາໃຊ້ດ້ານຜະລິດຕະພັນສຸຂະພາບດັ່ງກ່າວຢ່າງມີປະສິດຕິຜົນ, ລວມທັງການຊ່ວຍເຫຼືອດ້ານເຕັກນິກ[3];
2. ບົດສະເໜີຂໍທຶນ C19RM ແບບຄົບຊຸດ: ສືບຕໍ່ຈາກບົດສະເໜີຂໍທຶນ C19RM ແບບດ່ວນ, ຜູ້ສະໝັກສາມາດໃຊ້ເວລາຕໍ່ໄປເພື່ອປັບປຸງ ແລະ ສົ່ງເອກະສານສ່ວນທີ່ເຫຼືອຂອງບົດສະເໜີຂໍທຶນ C19RM, ເຊິ່ງປະກອບມີກິດຈະກໍາເພີ່ມເຕີມທີ່ເຫັນວ່າຈໍາເປັນພາຍໃຕ້ເງື່ອນໄຂຂອງການລົງທຶນສາມປະເພດ.

ໃນຂະນະທີ່ຂັ້ນຕອນບົດສະເໜີຂໍທຶນ C19RM ແບບດ່ວນ ມີຈຸດປະສົງເພື່ອຫຼຸດຜ່ອນຄວາມຊັກຊ້າໃນການນໍາໃຊ້ອົງປະກອບພື້ນຖານທີ່ສໍາຄັນໃຫ້ແກ່ບັນດາປະເທດຕ່າງໆເພື່ອຕອບໂຕ້ຕໍ່ COVID-19 ແລະ ອີກທາງເລືອກໜຶ່ງກໍ່ຄື ຜູ້ສະໝັກສາມາດເລືອກທີ່ຈະສະໝັກຂໍທຶນ C19RM ໂດຍຍື່ນບົດສະເໜີຂໍທຶນ C19RM ແບບຄົບຊຸດເທົ່ານັ້ນ.

ທຸກໆການຍື່ນບົດສະເໜີຂໍທຶນ C19RM (ບົດສະເໜີຂໍທຶນແບບດ່ວນ ແລະ ແບບຄົບຊຸດ) ຄວນສົ່ງໄປທີ່ C19RM@theglobalfund.org ພ້ອມດ້ວຍສໍາເນົາໃຫ້ທີມງານທີ່ກ່ຽວຂ້ອງຂອງກອງທຶນໂລກຮັບຮູ້ນໍາ.

ກອງທຶນໂລກຍອມຮັບເອກະສານສະໝັກຂໍທຶນເປັນພາສາອັງກິດ, ຝຣັ່ງ ຫລື ສະເປນ. ພາສາທີ່ເຮັດວຽກຂອງກອງເລຂາແມ່ນພາສາອັງກິດ. ກອງທຶນໂລກຈະແປພຽງແຕ່ລາຍລະອຽດບົດສະເໜີຂໍທຶນ ແລະ ເອກະສານສະເໜີທີ່ສໍາຄັນທີ່ສົ່ງເປັນພາສາຝຣັ່ງ ຫລື ສະເປນ. ເອກະສານເພີ່ມເຕີມສາມາດສົ່ງເປັນເອກະສານພາສາດັ້ງເດີມ, ກອງທຶນໂລກຈະແປ ແຕ່ຈະມີຈໍາກັດໃນພາກສ່ວນສະເພາະຕາມຄວາມຕ້ອງການ ໃນເມື່ອກອງເລຂາບໍ່ສາມາດຮັບປະກັນການແປເອກະສານເພີ່ມເຕີມທັງໝົດ. ຖ້າເປັນໄປໄດ້, ຜູ້ສະໝັກຈະຕ້ອງໄດ້ແປ ແລະ ສົ່ງເອກະສານຕິດຄັດທີ່ສໍາຄັນທີ່ສຸດເປັນພາສາອັງກິດ ແລະ ຖ້າຫາກວ່າທ່ານມີຄໍາຖາມກ່ຽວຂ້ອງກັບການແປ ແມ່ນໃຫ້ຕິດຕໍ່ພົວພັນກັບຜູ້ຈັດການກອງທຶນຂອງທ່ານ.

ກອງເລຂາຂອງກອງທຶນເພື່ອຕອບໂຕ້ຕໍ່ C19RM ຈະທົບທວນ ແລະ ອະນຸມັດທຶນ: (1) ທຸກບົດສະເໜີຂໍທຶນ C19RM ແບບດ່ວນ; ແລະ (2) ບົດສະເໜີຂໍທຶນ C19RM ແບບຄົບຊຸດ ສູງເຖິງ 35 ລ້ານໂດລາສະຫະລັດ ໂດຍໄດ້ຮັບຄໍາແນະນໍາຈາກຄູ່ຮ່ວມງານ (ລວມທັງຄູ່ຮ່ວມ ACT-Accelerator ທີ່ມີຄວາມຊໍານານດ້ານວິຊາການ COVID-19) ຕາມຄວາມເໝາະສົມ. ຄະນະກໍາມະການບໍລິຫານກອງທຶນໂລກຈະທົບທວນ ແລະ ອະນຸມັດບົດສະເໜີຂໍທຶນ C19RM ແບບຄົບຊຸດ ທີ່ແນະນໍາໂດຍຄະນະກໍາມະການໆລົງທຶນ C19RM ທີ່ເກີນ 35 ລ້ານໂດລາສະຫະລັດ.

ກະລຸນາອີງໃສ່ບົດແນະນໍາກ່ຽວກັບກົນໄກການຕອບໂຕ້ຕໍ່ COVID-19 (ເບິ່ງຂໍ້ມູນອ້າງອີງຕໍ່ໄປນີ້) ສໍາລັບການກໍານົດເວລາລະອຽດກ່ຽວກັບຂັ້ນຕອນການທົບທວນ ແລະ ອະນຸມັດບົດສະເໜີຂໍທຶນ C19RM. ຖ້າທຶນ C19RM ໄດ້ຖືກອະນຸມັດແລ້ວ ຈະມີການພົວພັນເຖິງຜູ້ສະເໜີຂໍທຶນ ກ່ຽວກັບຂັ້ນຕອນການປ່ຽນຈາກການອະນຸມັດ (awards) ເປັນທຶນຊ່ວຍເຫຼືອ (grants) ແມ່ນສາມາດເລີ່ມຕົ້ນໄດ້ທັນທີ.
ກອງທຶນໂລກອາດຈະເຜີຍແຜ່ ຫຼື ແຈກຢາຍຂໍ້ມູນທີ່ໄດ້ສົ່ງບາງສ່ວນຂອງບົດສະເໜີຂໍທຶນ C19RM. ສໍາລັບຄໍາຖາມ, ກະລຸນາຕິດຕໍ່ທີມງານປະຈໍາກອງທຶນໂລກທີ່ກ່ຽວຂ້ອງ.

[3] ຄ່າໃຊ້ຈ່າຍດັ່ງກ່າວປະກອບມີ, ແຕ່ບໍ່ຈໍາກັດ, ຄ່າທໍານຽມ PSA, ຄ່າຂົນສົ່ງ ແລະ ປະກັນໄພ, ຄ່າທໍານຽມ QA/QC, ຄ່າທໍານຽມພາສີ, ຄ່າຂົນສົ່ງພາຍໃນປະເທດ ແລະ ຄ່າໃຊ້ຈ່າຍໃນການເກັບຮັກສາ, ຄ່າໃຊ້ຈ່າຍໃນການແຈກຢາຍພາຍໃນປະເທດ ແລະ ຄ່າໃຊ້ຈ່າຍອື່ນໆທີ່ກ່ຽວຂ້ອງກັບ PSM.

## ການປະກອບບົດສະເໜີຂໍທຶນ C19RM

ສັງລວມຂໍ້ມູນ
ຂໍ້ມູນນີ້ແມ່ນໃຊ້ເພື່ອຈຸດປະສົງສໍາລັບການປະກອບຂໍ້ມູນ:

| | **ລາຍລະອຽດເງື່ອນໄຂຂໍ້ມູນ** |
|---|---|
| ປະເທດ (ຫຼື ຫລາຍປະເທດ) | ປະເທດທີ່ສະເໜີຂໍທຶນ C19RM (ຫຼື ລາຍຊື່ປະເທດ, ຖ້າມີການຮ້ອງຂໍທຶນຈາກຫຼາຍໆ ປະເທດ) |
| ຜູ້ຮັບທຶນຕົ້ນຕໍ, ຊື່ກອງທຶນຊ່ວຍເຫຼືອ ແລະ ໄລຍະການຈັດຕັ້ງປະຕິບັດ | ສະລັບທຶນ C19RM ຈະສົ່ງຜ່ານຜູ້ຮັບທຶນຕົ້ນຕໍ ແລະ ກອງທຶນຊ່ວຍເຫຼືອທີ່ມີຢູ່[4] ຜູ້ສະໝັກຕ້ອງໄດ້ຮັບການຊຸກຍູ້ຢ່າງແຂງແຮງເພື່ອກໍານົດການຈັດຕັ້ງປະຕິບັດທີ່ມີຢູ່ໃນປະຈຸບັນທີ່ດີທີ່ສຸດເພື່ອອໍານວຍຄວາມສະດວກໃຫ້ແກ່ການປະຕິບັດກິດຈະກໍາ C19RM ທີ່ມີປະສິດຕິຜົນ.<br><br>ກະລຸນາລວມເອົາໜ່ວຍງານທີ່ກ່ຽວຂ້ອງ ຫຼື ໜ່ວຍງານທີ່ຖືກສະເໜີໂດຍຜູ້ສະເໜີຂໍທຶນເພື່ອເຂົ້າໃນການປະຕິບັດກິດຈະກໍາ C19RM, ຊື່ກອງທຶນຊ່ວຍເຫຼືອ ແລະ ໄລຍະການຈັດຕັ້ງປະຕິບັດ (IP). ຖ້າບົດສະເໜີຂໍທຶນ C19RM ມີຈຸດປະສົງທີ່ຈະນໍາໃຊ້ທຶນຫຼາຍແຫຼ່ງທຶນ ແລະ ຫຼາຍໄລຍະການຈັດຕັ້ງປະຕິບັດ(IPs),ກະລຸນາໃສ່ລາຍລະອຽດຕໍ່ໄປນີ້:<br><br>1. [ຊື່ຜູ້ຮັບທຶນຕົ້ນຕໍPR1], [ຊື່ກອງທຶນ]-[ວັນທີເລີ່ມ IP1] ເຖິງ [ວັນສິ້ນສຸດ IP1]<br>2. [ຊື່ຜູ້ຮັບທຶນຕົ້ນຕໍPR1], [ຊື່ກອງທຶນ]-[ວັນທີເລີ່ມ IP2] ເຖິງ [ວັນສິ້ນສຸດ IP2]<br>3. [ຊື່ຜູ້ຮັບທຶນຕົ້ນຕໍPR2], [ຊື່ກອງທຶນ]-[ວັນທີເລີ່ມ IP] ເຖິງ [ວັນສິ້ນສຸດ IP] |
| ວັນເລີ່ມຕົ້ນແລະວັນສິ້ນສຸດຂອງແຜນກິດຈະກໍາ C19RM ໂດຍທຶນຊ່ວຍເຫຼືອ | ວັນທີທີ່ຄາດວ່າຈະເລີ່ມຕົ້ນ ແລະ ສິ້ນສຸດກິດຈະກໍາ C19RM ໂດຍທຶນຊ່ວຍເຫຼືອນີ້. ຖ້າບົດສະເໜີຂໍທຶນ C19RM ມີຈຸດປະສົງທີ່ຈະນໍາໃຊ້ທຶນໃນຫຼາຍແຫຼ່ງທຶນ ແລະ ຫຼາຍໄລຍະການຈັດຕັ້ງປະຕິບັດ (IPs), ກະລຸນາໃສ່ລາຍລະອຽດດັ່ງຕໍ່ໄປນີ້:<br><br>1. [ຊື່ຜູ້ຮັບທຶນຕົ້ນຕໍPR1], [ຊື່ກອງທຶນ] - [ວັນທີເລີ່ມ IP1] ເຖິງ [ວັນສິ້ນສຸດ IP1]<br>– [ວັນທີເລີ່ມ] ເຖິງ [ວັນສິ້ນສຸດ] ສໍາລັບທຸກໆກິດຈະກໍາທີ່ກ່ຽວຂ້ອງກັບທຶນນີ້<br>2. [ຊື່ຜູ້ຮັບທຶນຕົ້ນຕໍPR1], [ຊື່ກອງທຶນ] - [ວັນທີເລີ່ມ IP2] ເຖິງ [ວັນສິ້ນສຸດ IP2]<br>– [ວັນທີເລີ່ມ] ເຖິງ [ວັນສິ້ນສຸດ] ສໍາລັບທຸກໆກິດຈະກໍາທີ່ກ່ຽວຂ້ອງກັບທຶນນີ້<br>3. [ຜູ້ຮັບທຶນຕົ້ນຕໍPR2 ], [ຊື່ກອງທຶນ] - [ວັນເລີ່ມ IP] ເຖິງ [ວັນສິ້ນສຸດ IP]<br>– [ວັນທີເລີ່ມ] ເຖິງ [ວັນສິ້ນສຸດ] ສໍາລັບທຸກໆກິດຈະກໍາທີ່ກ່ຽວຂ້ອງກັບທຶນນີ້<br><br>**ກະລຸນາຮັບຊາບວ່າ ກໍານົດເວລາໃນການນໍາໃຊ້ທຶນ C19RM ໃນທຸກໆກໍລະນີແມ່ນຈະສິ້ນສຸດລົງໃນວັນທີ 31 ທັນວາ 2023** |
| ສະກຸນເງິນ | ສະກຸນເງິນທີ່ກ່ຽວຂ້ອງຕາມໜັງສືວ່າດ້ວຍການຈັດສັນທຶນ C19RM ແມ່ນ (ເອີໂຣ ຫຼື ໂດລາສະຫະລັດ). ສະກຸນເງິນນີ້ກໍ່ຄວນສອດຄ່ອງກັບສະກຸນເງິນຊ່ວຍເຫຼືອ. |
| ຈໍານວນທຶນຕາມການຈັດ | ຈໍານວນທຶນທີ່ຜູ້ສະໝັກສະເໜີ ຄວນຈະຂຶ້ນກັບຈໍານວນທຶນຕາມການຈັດສັນທຶນໂດຍ |

[4] ຜູ້ປະຕິບັດໃໝ່ອາດຈະຖືກພິຈາລະນາໃນກໍລະນີພິເສດ, ໂດຍອີງໃສ່ການຈັດການຮັບປະກັນທີ່ເພິ່ງພໍໃຈແລະຄວາມສາມາດໃນການຈັດຕັ້ງປະຕິບັດກິດຈະກໍາທີ່ສະເໜີໂດຍໄວ. ກະລຸນາເບິ່ງໃນພາກທີ 1 ຂອງຄໍາແນະນໍາ C19RM (ເບິ່ງຂໍ້ມູນເຊື່ອມຕໍ່ໄປນີ້) ສໍາລັບລາຍລະອຽດເພີ່ມເຕີມ.

| | |
|---|---|
| ສັນທຶນໂດຍພື້ນຖານຂອງ C19RM | ພື້ນຖານຂອງ C19RM ທີ່ໄດ້ກຳນົດໄວ້ໃນໜັງສືວ່າດ້ວຍການຈັດສັນທຶນ C19RM.<br><br>ຈຳນວນທຶນເອົາເຂົ້າໃນພາກນີ້ຄວນສອດຄ່ອງກັນກັບຢູ່ໃນທຸກເອກະສານຂໍທຶນສຳລັບ: (1) ບົດສະເໜີຂໍທຶນ C19RM ແບບດ່ວນ; ແລະ (2) ບົດສະເໜີຂໍທຶນ C19RM ແບບຄົບຊຸດ. ກະລຸນາໃສ່ຈຳນວນ ແລະ ວັນທີຍື່ນບົດສະເໜີຂໍແຕ່ລະທຶນ. |
| ຈຳນວນທຶນເພີ່ມເຕີມຂອງ C19RM | ຈຳນວນທຶນທີ່ຂໍເພີ່ມເຕີມນອກຈາກທຶນຕາມການຈັດສັນທຶນ C19RM ໂດຍພື້ນຖານ. ທຶນເພີ້ມເຕີມຂອງ C19RM ດັ່ງກ່າວຄວນຈະສົ່ງໃຫ້ເປັນສ່ວນໜຶ່ງຂອງບົດສະເໜີຂໍທຶນ C19RM ແບບຄົບຊຸດເທົ່ານັ້ນ.<br><br>ຈຳນວນທຶນເອົາເຂົ້າໃນພາກນີ້ ຄວນສອດຄ່ອງກັນກັບຢູ່ໃນທຸກເອກະສານສຳລັບບົດສະເໜີຂໍທຶນ C19RM ແບບຄົບຊຸດ. |

## ພາກທີ 1. ບົດສະເໜີຂໍທຶນ C19RM ແບບດ່ວນ (ອຸປະກອນປ້ອງກັນຕົວ PPE, ການບົ່ງມະຕິ ແລະ ປິ່ນປົວ[5] ແລະ ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການນຳໃຊ້ຜະລິດຕະພັນສຸຂະພາບທີ່ມີປະສິດຕິຜົນ ລວມທັງການຊ່ວຍເຫຼືອທາງດ້ານວິຊາການ)

ບົດສະເໜີຂໍທຶນ C19RM ແບບດ່ວນ ແມ່ນໃຊ້ກັບການຈັດຊື້ຜະລິດຕະພັນສຸຂະພາບຂອງ COVID-19 ຢ່າງຮີບດ່ວນລວມທັງເຄື່ອງ PPE, ເຄື່ອງບົ່ງມະຕິ, ຢາປິ່ນປົວ ແລະ ຄ່າໃຊ້ຈ່າຍຕ່າງໆທີ່ກ່ຽວຂ້ອງກັບການນຳໃຊ້ຜະລິດຕະພັນສຸຂະພາບເຫຼົ່ານັ້ນຢ່າງມີປະສິດຕິຜົນ ຊຶ່ງປະກອບມີ, ແຕ່ບໍ່ຈຳກັດພຽງເທົ່ານີ້, ຄ່າທຳນຽມ PSA, ຄ່າຂົນສົ່ງ ແລະ ປະກັນໄພ, ຄ່າທຳນຽມ QA/QC, ຄ່າທຳນຽມພາສີ, ຄ່າສາງເກັບມ້ຽນພາຍໃນປະເທດ, ຄ່າໃຊ້ຈ່າຍໃນການເກັບຮັກສາ, ຄ່າໃຊ້ຈ່າຍໃນການແຈກຢາຍຢູ່ພາຍໃນປະເທດ ແລະ ຄ່າໃຊ້ຈ່າຍອື່ນໆທີ່ກ່ຽວຂ້ອງກັບ PSM, ພ້ອມທັງການຊ່ວຍເຫຼືອດ້ານວິຊາການ ເພື່ອສະໜັບສະໜູນການນຳໃຊ້ຜະລິດຕະພັນສຸຂະພາບຂອງ COVID-19 ຢ່າງມີປະສິດທິຜົນ.

ຜະລິດຕະພັນສຸຂະພາບສະເພາະທີ່ມີສິດໄດ້ຮັບການອະນຸມັດຜ່ານບົດສະເໜີຂໍທຶນ C19RM ແບບດ່ວນ ໄດ້ຖືກກຳນົດໄວ້ໃນໝວດທີ່ດີທີ່ສຸດພາຍໃນກອບພາກສ່ວນຜະລິດຕະພັນສຸຂະພາບ (ເບິ່ງຂໍ້ມູນອ້າງອີງຕໍ່ໄປນີ້) ແລະ ມີຄວາມກະຈ່າງແຈ້ງຕື່ມໃນຄູ່ມື ແລະ ຄຳແນະນຳດ້ານວິຊາການ C19RM (ເບິ່ງຂໍ້ມູນອ້າງອີງຕໍ່ໄປນີ້) **ໜັງສືວ່າດ້ວຍການຈັດສັນທຶນ C19RM ໃຫ້ຄຳແນະນຳກ່ຽວກັບຈຳນວນທຶນ C19RM ທີ່ໄດ້ມີການຈັດສັນໂດຍພື້ນຖານ ເຊິ່ງສາມາດສະໝັກຂໍທຶນໂດຍຜ່ານບົດສະເໜີຂໍທຶນ C19RM ແບບດ່ວນໄດ້.**

ສຳລັບການຍື່ນບົດສະເໜີຂໍທຶນ C19RM ແບບດ່ວນ, ຜູ້ສະໝັກພຽງແຕ່ເຮັດ ສະຫຼຸບສັງລວມໜ້າເອກະສານ ແລະ ພາກທີ 1 ຂອງແບບຟອມບົດສະເໜີຂໍທຶນ C19RM.

**<u>ແນະນຳຄວາມຍາວສຳລັບການຕອບຄຳຖາມນີ້: ປະກອບມີ 2 ໜ້າ</u>**

### 1.1 ບູລິມະສິດໃນການສະໜອງທຶນ

ໃນພາກນີ້ອະນຸຍາດໃຫ້ຜູ້ສະໝັກຂໍທຶນສາມາດອະທິບາຍວ່າເປັນຫຍັງຜະລິດຕະພັນສຸຂະພາບເຫຼົ່ານີ້ຈຶ່ງໄດ້ຮັບບູລິມະສິດພາຍໃຕ້ບົດສະເໜີຂໍທຶນ C19RM ແບບດ່ວນ. ກະລຸນາຢືນຢັນວ່າ ບົດສະເໜີຂໍທຶນດັ່ງກ່າວນີ້ແມ່ນສອດຄ່ອງກັບຄູ່ມື ແລະ ຄຳແນະນຳດ້ານວິຊາການ C19RM (ເບິ່ງຂໍ້ມູນອ້າງອີງຕໍ່ໄປນີ້) ແລະ ຄູ່ມືແນະນຳຂອງ WHO ແລະ ໄດ້ອະທິບາຍວິທີການຊຸກຍູ້ການປະຕິບັດກິດຈະກຳ NSPRP (ສະບັບປັບປຸງໃໝ່ ປີ 2021).

[5] ດັ່ງທີ່ໄດ້ກຳນົດໄວ້ໃນໝວດທີ່ດີທີ່ສຸດພາຍໃນຂອບເຂດຜະລິດຕະພັນສຸຂະພາບ (ເບິ່ງຂໍ້ມູນເຊື່ອມຕໍ່ໄປນີ້).

ສຳລັບທຶນ C19RM ອາດຈະໄດ້ນຳໃຊ້ເພື່ອຈັດຊື້ຜະລິດຕະພັນຢາ ແລະ ເຄື່ອງບົ່ງມະຕິທີ່ໄດ້ຮັບການອະນຸມັດພາຍໃຕ້ຂັ້ນຕອນການນຳໃຊ້ ແລະ ລາຍການກໍລະນີສຸກເສີນຂອງ WHO ຫຼື ພາຍໃຕ້ຂັ້ນຕອນສຸກເສີນອື່ນໆທີ່ສ້າງຕັ້ງຂຶ້ນໂດຍໜ່ວຍງານເຈົ້າໜ້າທີ່ຄຸ້ມຄອງລະບຽບທີ່ເຂັ້ມງວດ ຕາມທີ່ໄດ້ກຳນົດໄວ້ພາຍໃຕ້ນະໂຍບາຍການປະກັນຄຸນນະພາບຜະລິດຕະພັນຢາ ແລະ ນະໂຍບາຍການຮັບປະກັນຄຸນນະພາບຜະລິດຕະພັນເຄື່ອງບົ່ງມະຕິຂອງກອງທຶນໂລກ. ກະລຸນາອີງໃສ່ ຄູ່ມື ແລະ ຄຳແນະນຳດ້ານວິຊາການຂອງ C19RM (ເບິ່ງຂໍ້ມູນອ້າງອີງຕໍ່ໄປນີ້), ພ້ອມກັບຄຳແນະນຳກ່ຽວກັບນະໂຍບາຍກອງທຶນໂລກວ່າດ້ວຍການຄຸ້ມຄອງການຈັດຊື້ ແລະ ການສະໜອງຜະລິດຕະພັນສຸຂະພາບ ເພື່ອລາຍລະອຽດເພີ່ມເຕີມກ່ຽວກັບການຈັດຊື້ຜະລິດຕະພັນສຸຂະພາບ COVID-19 ໂດຍທົ່ວໄປ.

ສຸດທ້າຍ, ກະລຸນາລະບຸວ່າ ຄະນະກຳມະການປະສານງານຕອບໂຕ້ຕໍ່ COVID-19 ແຫ່ງຊາດ, ວຽກງານຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ, ສາງຜະລິດຕະພັນການແພດຂັ້ນສູນກາງ (ຫຼື ທຽບເທົ່າ) ພະແນກບໍລິການດ້ານການຢາ ແລະ ອີງການຄຸ້ມຄອງຢາ ຕາມຄວາມເໝາະສົມໃນແຕ່ລະປະເທດ ແລະ ໂຄງການທ້ອງທົດລອງໄດ້ຮັບການປຶກສາຫາລືໃນເມື່ອການກະກຽມບົດສະເໜີຂໍທຶນ C19RM ແບບດ່ວນ ແລະ ວິທີການນຳເອົາຜົນການຈັດຕັ້ງປະຕິບັດໄປພິຈາລະນາເພື່ອຮັບປະກັນວ່າບົດສະເໜີດັ່ງກ່າວນີ້ ສອດຄ່ອງກັນກັບການສະເໜີຂອງ NSPRP ແລະ ປັບປຸງຊ່ອງຫວ່າງການດຳເນີນງານ ແລະ ການເງິນ, ຄວາມຈຳເປັນອັນຮີບດ່ວນ ແລະ ບູລິມະສິດຕ່າງໆ.

## 1.2 ການຈັດຕັ້ງປະຕິບັດໂຄງການ

ພາກນີ້ແມ່ນມີຄວາມສຳຄັນຫຼາຍສຳລັບກອງທຶນໂລກທີ່ຈະເຂົ້າໃຈເຖິງການຈັດຕັ້ງປະຕິບັດໂຄງການວ່າກ່ຽວກັບວຽກງານການຈັດຊື້ຈັດຈ້າງຜະລິດຕະພັນສຸຂະພາບຕາມທີ່ໄດ້ຮ້ອງຂໍໄປນັ້ນມີຂັ້ນຕອນໃດແດ່. ຈົ່ງໃຫ້ລາຍລະອຽດກ່ຽວກັບ:

ກ. **ການຈັດການຈັດຕັ້ງປະຕິບັດ:** ຜູ້ຈັດຕັ້ງປະຕິບັດທີ່ກ່ຽວຂ້ອງ (ຜູ້ຮັບທຶນຕົ້ນຕໍ (PR), ຜູ້ຮັບທຶນຍ່ອຍ (SR) ແລະ ໜ່ວຍງານຈັດຕັ້ງປະຕິບັດອື່ນໆ) ລວມທັງພາຍໃຕ້ທຶນຊ່ວຍເຫຼືອບ້ອງໃດທີ່ຈະຮັບຜິດຊອບໃນການຈັດຕັ້ງປະຕິບັດກິດຈະກຳເຫຼົ່ານີ້ ພ້ອມທັງຊ່ອງທາງການຈັດຊື້ທີ່ອາດຈະຈັດຊື້ຜ່ານຊ່ອງທາງ (PPM / Wambo ຫຼື ຜ່ານຕາມຂັ້ນຕອນຂອງ PR ພາຍໃນປະເທດ) (ລວມທັງການອ້າງອີງໃສ່ແຜນທີ່ການຈັດຕັ້ງປະຕິບັດຕາມຂໍ້ມູນທີ່ມີຢູ່ແລ້ວ).

ຂ. **ການຈັດສົ່ງໂປແກຼມທີ່ມີປະສິດທິພາບ:** ວິທີການເກັບມ້ຽນຜະລິດຕະພັນສຸຂະພາບ, ແຈກຢາຍ ແລະ ຕິດຕາມໃນຂະນະທີ່ລະບົບການສະໜອງແບບຕ່ອງໂສ້ໄດ້ຍ້າຍລົງໄປບໍລິການຢູ່ທີ່ບ່ອນຂົນສົ່ງເພື່ອສົ່ງໃຫ້ເຖິງຜູ້ໄດ້ຮັບຜົນປະໂຫຍດສຸດທ້າຍ ພາຍຫຼັງທີ່ຜະລິດຕະພັນໄດ້ຮັບການຈັດຊື້ ແລະ ສົ່ງມາເຖິງພາຍໃນປະເທດ ລວມທັງໄລຍະເວລາທີ່ກ່ຽວຂ້ອງທີ່ຄາດໄວ້ໃນແຕ່ລະບາດກ້າວ. ກະລຸນາອະທິບາຍກົນໄກກິດຈະກຳໃນການເກັບຮັກສາ ແລະ ແຈກຢາຍ ພ້ອມທັງລະບົບການລາຍງານ (ເຊັ່ນ ລະບົບຂໍ້ມູນຄຸ້ມຄອງວຽກງານການຂົນສົ່ງ (LMIS)) ເຊິ່ງຊີ້ບອກວ່າມັນແມ່ນອັນດຽວກັນ ຫຼື ແຕກຕ່າງກັບຈຸດບໍລິການສຳລັບວຽກງານຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງປະຈຸບັນ ຢູ່ພາຍໃຕ້ທຶນຊ່ວຍເຫຼືອຂອງກອງທຶນໂລກ.

ຄ. **ການຄຸ້ມຄອງຜະລິດຕະພັນສຸຂະພາບ:** ກົນໄກທີ່ວາງແຜນໄວ້ສຳລັບວຽກງານການຈັດຊື້ຜະລິດຕະພັນສຸຂະພາບ COVID-19. ອະທິບາຍບັນດາໜ່ວຍງານທີ່ຮັບຜິດຊອບໃນການຄາດຄະເນ/ປະລິມານ, ການຈັດຊື້, ການເກັບຮັກສາ, ການແຈກຢາຍ, ການຕິດຕາມການຕອບສະໜອງ ແລະ ການນຳໃຊ້ ຜະລິດຕະພັນສຸຂະພາບທີ່ຫມີຢູ່ສະເພາະ COVID-19 ໃຫ້ແກ່ຜູ້ທີ່ໄດ້ຮັບຜົນປະໂຫຍດ ແລະ ສະຖານທີ່ຈັດການບໍລິການຕ່າງໆ (ຊີ້ແຈງວ່າຜະລິດຕະພັນດັ່ງກ່າວ ແມ່ນແຕກຕ່າງຈາກຈຸດບໍລິການວຽກງານຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ ໃນປະຈຸບັນ). ກະລຸນາປະກອບມີບົດສະຫຼຸບກ່ຽວກັບຄວາມສ່ຽງຂອງການຕອບສະໜອງແບບຕ່ອງໂສ້ພາຍໃນປະເທດທີ່ຄາດໄວ້ລ່ວງໜ້າ ເຊິ່ງລວມມີການຮັບປະກັນຄຸນນະພາບ ແລະ ສິ່ງທີ່ຕ້ານຕໍ່ລະບຽບການຕ່າງໆ.

## 1.3 ເອກະສານຄັດຕິດບົດສະເໜີຂໍທຶນ C19RM ແບບດ່ວນ

ສະຫຼຸບສັງລວມບັນດາຂໍ້ມູນພ້ອມກັບແບບຟອມບົດສະເໜີຂໍທຶນ C19RM ພາກທີ 1 ໄດ້ເຮັດສຳເລັດແລ້ວ, ກະລຸນາກວດສອບ ແລະ ຮັບປະກັນວ່າ ເອກະສານຕໍ່ໄປນີ້ໄດ້ເຮັດສຳເລັດແລ້ວ ແລະ ມີເອກະສານຄັດຕິດປະກອບມີ:

ກ. **ງົບປະມານລວມຂອງ C19RM** ທີ່ຊີ້ບອກໃຫ້ຜູ້ຈັດຕັ້ງປະຕິບັດທີ່ກ່ຽວຂ້ອງ (ແລະ ທຶນຊ່ວຍເຫຼືອ) ສຳລັບກິດຈະກຳສ່ວນບຸກຄົນ. ເພື່ອໃຫ້ສຳເລັດງົບປະມານດັ່ງກ່າວໂດຍອີງໃສ່ຄຳແນະນຳໃນການສ້າງແບບແຜນງົບປະມານລາຍລະອຽດໃຫ້ສຳເລັດ, ຄຳແນະນຳໃນການຂຶ້ນແຜນງົບປະມານທຶນຊ່ວຍເຫຼືອ ແລະ ບົດບັນທຶກນະໂຍບາຍການດຳເນີນງານກ່ຽວກັບຄ່າໃຊ້ຈ່າຍໃນການສະໜັບສະໜູນ / ນະໂຍບາຍການກູ້ຄືນຄ່າໃຊ້ຈ່າຍທາງອ້ອມ (ICR) ສຳລັບອົງການທີ່ບໍ່ຂຶ້ນກັບລັດຖະບານ. **ແບບແຜນງົບປະມານດັ່ງກ່າວ ທີມງານກອງທຶນໂລກຈະເປັນຜູ້ສະໜອງໃຫ້.**

ຂ. **ການປະເມີນປະລິມານຄວາມຕ້ອງການອັນຮີບດ່ວນດ້ານຜະລິດຕະພັນສຸຂະພາບຂອງ COVID-19,** ລວມທັງການປະກອບສ່ວນ ແລະ ການຄາດຄະເນການແຈກຢາຍຜະລິດຕະພັນສຸຂະພາບ ທີ່ໄດ້ຮັບການສະໜັບສະໜູນຈາກແຫຼ່ງທຶນພາຍໃນ ແລະ ແຫຼ່ງທຶນອື່ນໆ ທີ່ໄດ້ແຈ້ງໃຫ້ຊາບໃນບົດສະເໜີຂໍທຶນ C19RM ແບບດ່ວນ. ບົດສະເໜີຂໍທຶນດັ່ງກ່າວນີ້ ຄວນປະກອບມີຈຳນວນຜະລິດຕະພັນພັນສຸຂະພາບທີ່ໄດ້ຮ້ອງຂໍທີ່ມີຢູ່ໃນສາງໃນປະຈຸບັນ ແລະ ການຈັດຊື້ໃດໜຶ່ງທີ່ກຳລັງລໍການດຳເນີນຢູ່ ຫຼື ການຈັດຊື້ຕາມແຜນ. ຜູ້ສະໝັກສາມາດສົ່ງຂໍ້ມູນດັ່ງກ່າວນີ້ໃນຮູບແບບໃດກໍ່ໄດ້ ແຕ່ຕ້ອງໄດ້ລະບຸຄວາມຕ້ອງການອັນຮີບດ່ວນ ພ້ອມທັງການການຄາດຄະເນການປະກອບສ່ວນຈາກແຕ່ລະແຫຼ່ງທຶນທີ່ມີຢູ່ໃນປະຈຸບັນ.

ສຳລັບປະລິມານຜະລິດຕະພັນສຸຂະພາບຂອງ COVID-19, ກະລຸນາອ້າງອີງໃສ່ເຄື່ອງມືໃດໜຶ່ງ ທີ່ມີມາດຕະຖານດ້ານປະລິມານ (ຕົວຢ່າງ: ເຄື່ອງມືການພະຍາກອນອາຫານຂອງ WHO ກ່ຽວກັບ COVID-19 ຫຼື ເຄື່ອງມືທີ່ໄດ້ຕົກລົງກັນໃຊ້ໃນລະດັບຊາດ. ຖ້າບໍ່ໄດ້ມີເຄື່ອງມືໃຊ້ມາຮອດປະຈຸບັນ, ຜູ້ສະໝັກຄວນຈະເຊື່ອມໂຍງປະລິມານຜະລິດຕະພັນດັ່ງກ່າວເຂົ້າໃນຂໍ້ມູນການສ້າງແບບແຜນການແຜ່ລະບາດຂອງພະຍາດແຫ່ງຊາດທີ່ມີຢູ່ ເພື່ອເປັນການສ້າງຂໍ້ມູນຄາດຄະເນໄວ້ໃນອະນາຄົດໃນປີ 2020 ໂດຍສະເພາະເປັນຂໍ້ມູນຈາກຄະນະປະສານງານຕອບໂຕ້ຕໍ່ COVID-19 ແຫ່ງຊາດ) ເພື່ອເປັນເຫດຜົນຄາດການຄວາມຕ້ອງການອີງໃສ່ NSPRP ເປັນຕົ້ນແມ່ນການປະເມີນປະລິມານຄວາມຕ້ອງການອັນຮີບດ່ວນລະດັບຊາດ ອາດຈະນຳເປັນແຜນຍ່ອຍທີ່ຈະໄດ້ຕື່ມເຂົ້າໃນ C19RM HPMT ເຊິ່ງກວມເອົາການສະໜັບສະໜູນຜູ້ໃຫ້ທຶນພາຍໃນ ແລະ ຜູ້ໃຫ້ທຶນອື່ນໆ.

| ກິດຈະກຳຕົ້ນຕໍຂອງ COVID-19 | ຂໍ້ມູນທີ່ຈະຕ້ອງໄດ້ມີຮ່ວມກັບບົດສະເໜີຂໍທຶນ C19RM ແບບດ່ວນ ກໍລະນີຖ້າບໍ່ມີເຄື່ອງມືທີ່ມາດຕະຖານດ້ານປະລິມານ | |
|---|---|---|
| ການກວດ | • ຍຸດທະສາດແຫ່ງຊາດໃນການກວດ COVID-19 ລວມມີເຄື່ອງກວດ PCR ຈຳນວນໜຶ່ງ ແລະ ວິທີການກວດດ້ວຍເຄື່ອງບົ່ງມະຕິທີ່ໄດ້ຮັບຜົນໄວ Antigen Rapid Diagnostics (Ag-RDT) ແລະ ມີແຜນການເພື່ອເພີ່ມປະສິດທິພາບໃນການກວດໃນເອທີຕ່າງໆ;<br>• ຄາດຄະເນຈຳນວນການກວດສຳລັບ xx ເດືອນ;<br>• ການສົມມຸດຖານປະລິມານຂອງອຸປະກອນ / PPE ສຳລັບການກວດ ຫຼື ການຊົມໃຊ້ປະຈຳເດືອນ; | • ການເກັບຮັກສາໄວ້ພາຍໃນປະເທດ;<br>• ປະລິມານການແຈກ ຢາຍ;<br>• ຜະລິດຕະພັນທີ່ຈະໄດ້ຮັບການສະໜັບສະໜູນຈາກຜູ້ໃຫ້ທຶນພາຍໃນ ແລະ ຜູ້ໃຫ້ທຶນອື່ນໆໃນອະນາຄົດທີ່ກຳລັງວາງແຜນ ຫຼື ປະເມີນເປີເຊັນຂອງການຮ້ອງ |
| ການຄວບຄຸມການ | • ຄາດຄະເນຈຳນວນແພດປິ່ນປົວ ແລະ ປະຊາກອນທີ່ໄດ້ | |

| | | |
|---|---|---|
| ຕິດເຊື້ອແລະການປ້ອງກັນ (IPC) | ກວມເອົາປະມານ xx ເດືອນ;<br>• ຄາດຄະເນຈໍານວນສະຖານທີ່ບໍລິການດ້ານສາທາລະນະສຸກບ ຫຼື ຊຸມຊົນທີ່ໄດ້ກວມເອົາປະມານ xxເດືອນ | ຂໍຈາກກອງທຶນໂລກ |
| ການປິ່ນປົວ | • ການສົມມຸດຖານປະລິມານຂອງອຸປະກອນ PPE ສໍາລັບ IPC ຫຼື ການຄາດຄະເນການຊົມໃຊ້ປະຈໍາເດືອນ;<br>• ຄາດຄະເນຈໍານວນແພດທີ່ໄດ້ກວມເອົາປະມານ xx ເດືອນ<br>• ຄາດຄະເນຈໍານວນຄົນເຈັບທີ່ຖືກກວມເອົາປະມານ xx ເດືອນ ແລະ ໄດ້ໃຊ້ບໍລິການອົກຊີເຈນ / corticosteroid<br>• ການສົມມຸດຖານປະລິມານຜະລິດຕະພັນສຸຂະພາບ ຫຼື ປະເມີນການຊົມໃຊ້ປະຈໍາເດືອນ<br>• ການສົມມຸດຖານປະລິມານອຸປະກອນ PPE ຫຼື ປະເມີນການຊົມໃຊ້ປະຈໍາເດືອນ | |

**ເອກະສານອ້າງອີງທີ່ເປັນປະໂຫຍດ:**

- ເຄື່ອງມືການພະຍາກອນອາຫານຂອງ WHO ກ່ຽວກັບ COVID-19 (ສະບັບພາສາອັງກິດ ແລະ ພາສາລັດເຊຍເທົ່ານັ້ນ);
- ເວບໄຊ້ຂອງ COVID-19 PPE;
- ຄໍາແນະນໍາຊົ່ວຄາວຂອງ WHO ກ່ຽວກັບການນໍາໃຊ້ PPE ສໍາລັບພະຍາດໂລກລະບາດ (COVID-19) ແລະ ການພິຈາລະນາໃນໄລຍະການຂາດແຄນທີ່ຮ້າຍແຮງ;
- ລາຍການອຸປະກອນການແພດຂອງ WHO ທີ່ເປັນບຸລິມະສິດສໍາລັບການຄຸ້ມຄອງກໍລະນີຂອງ COVID-19 ໃນແຕ່ລະຂັ້ນ;
- WHO Corticosteroids ສໍາລັບ COVID-19.

**ຄ. ຍຸດທະສາດແຫ່ງຊາດໃນການກວດ COVID-19, ຖ້າວ່າມີ ກໍ່ຄວນຄັດຕິດມາພ້ອມ**

**໑. ຮ່າງແບບຟອມການຄຸ້ມຄອງຜະລິດຕະພັນສຸຂະພາບ C19RM** (C19RM HPMT; ເບິ່ງຂໍ້ມູນອ້າງອີງຕໍ່ໄປນີ້), ໂດຍກໍານົດລາຍລະອຽດກ່ຽວກັບທຶນຊ່ວຍເຫຼືອໂດຍພື້ນຖານທຶນຊ່ວຍເຫຼືອທຸກໆດ້ານຜະລິດຕະພັນສຸຂະພາບ ແລະ ເຕັກໂນໂລຢີດ້ານສຸຂະພາບນອກເໜືອຈາກການສົມມຸດຖານທີ່ສໍາຄັນກ່ຽວກັບປະລິມານ ແລະ ຄ່າໃຊ້ຈ່າຍທີ່ຈະໄດ້ຮັບການສະໜອງທຶນຈາກກອງທຶນໂລກ. ສໍາລັບແຕ່ລະຜະລິດຕະພັນສຸຂະພາບຈະມີລາຍການທີ່ລະບຸວ່າ: ເຕັກໂນໂລຢີ ແລະ ການບໍລິການ, ຄາດຄະເນປະລິມານການຊົມໃຊ້ (ຖ້າວ່າໄດ້ຊົມໃຊ້ເລື້ອຍໆ) ທີ່ຈະໄດ້ຮັບການຈັດຊື້ໃນແຕ່ລະປີໃນຊ່ວງໄລຍະການຈັດຕັ້ງປະຕິບັດ, ປະເມີນລາຄາຫົວໜ່ວຍອ້າງອີງ ແລະ ການຄຸ້ມຄອງລາຄາການຈັດຊື້ ແລະ ການສະຕອບໜອງ (PSM) ທີ່ກ່ຽວຂ້ອງກັບການຄຸ້ມຄອງຜະລິດຕະພັນໃນວຽກງານການປິ່ນປົວ, ການບົ່ງມະຕິ, ການດູແລ ແລະ ການປ້ອງກັນ.

C19RM HPMT ຖືກອອກແບບມາເພື່ອເກັບກຳທຸກຂໍ້ມູນທີ່ສຳຄັນໃນການນຳໃຊ້ເປັນການສົມມຸດຖານປະລິມານທີ່ກ່ຽວຂ້ອງກັບການຈັດຊື້ຜະລິດຕະພັນສຸຂະພາບ, ການບໍລິການ ແລະ ຄ່າໃຊ້ຈ່າຍໃນການຄຸ້ມຄອງ. ດັ່ງທີ່ໄດ້ກ່າວໃນ C19RM HPMT, ຂໍ້ມູນເພີ່ມເຕີມໃດໜຶ່ງທີ່ກ່ຽວຂ້ອງ (ເຊັ່ນ: ຍຸດທະສາດແຫ່ງຊາດໃນການກວດ, ການປິ່ນປົວ ແລະ ສູດຄິດໄລ່, ບົດລາຍງານແຫ່ງຊາດກ່ຽວກັບປະລິມານການຄາດຄະເນ, ບົດລາຍງານຜະລິດຕະພັນໃນສາງ ແລະ ແຜນການແຈກຢາຍ ໂດຍການນຳໃຊ້ເຕັກໂນໂລຢີດ້ານສາທາລະນະສຸກ) ເຮັດໃຫ້ສາມາດສົ່ງເປັນຮູບແບບທີ່ເຫັນວ່າເໝາະສົມກັບຜູ້ສະໝັກແຕ່ລະທ່ານ.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບວິທີການຕື່ມຂໍ້ມູນໃສ່ໃນຮ່າງແບບຟອມ C19RM HPMT, ກະລຸນາເບິ່ງຕາມຄຳແນະນຳໃນຮ່າງແບບຟອມ ແລະ ໃຫ້ຮັບຊາບວ່າຜະລິດຕະພັນສຸຂະພາບ ແລະ ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງ (ຄ່າບໍລິການຕົວແທນການຈັດຊື້, ຄ່າຂົນສົ່ງແລະປະກັນໄພ, ຄ່າທຳນຽມ QA / QC, ຄ່າທຳນຽມພາສີ, ຄ່າສາງ ແລະ ຄ່າເກັບຮັກສາພາຍໃນປະເທດ, ຄ່າແຈກຢາຍຢູ່ພາຍໃນປະເທດ ແລະ ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບ PSM ອື່ນໆ. ຄ່າໃຊ້ຈ່າຍທັງໝົດແມ່ນຢູ່ພາຍໃຕ້ໝວດຄ່າໃຊ້ຈ່າຍທີ 7) ຄວນເອົາລວມເຂົ້າໃນຂໍ້ (ກ) COVID-19 ໂດຍກົງ; ແລະ ຂໍ້ (ຂ) ການຫຼຸດຜ່ອນຜົນກະທົບຈາກ COVID-19 ກ່ຽວກັບການໃຫ້ບໍລິການວຽກງານຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ. ກິດຈະກຳການເສີມສ້າງລະບົບການຄຸ້ມຄອງຜະລິດຕະພັນສຸຂະພາບ (ເຊັ່ນ: ລະບົບການຄຸ້ມຄອງ HPM/SC, ລະບຽບການ, ຄວາມສາມາດໃນການເກັບຮັກສາແລະແຈກຢາຍ ແລະ ການຄຸ້ມຄອງສິ່ງເສດເຫຼືອ) ຄວນເອົາລວມເຂົ້າໃນຂໍ້ (ຄ) ການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບສາທາລະນະສຸກຊຸມຊົນ. **The C19RM HPMT ແມ່ນເງື່ອນໄຂຈຳເປັນສຳລັບຜູ້ສະໝັກທຸກຄົນ.**

**ຈ. ການຮັບຮອງຈາກ CCM ສຳລັບບົດສະເໜີຂໍທຶນ C19RM ແບບດ່ວນ.** ກອງທຶນໂລກຮຽກຮ້ອງໃຫ້ມີຫຼັກຖານຢັ້ງຢືນການຮັບຮອງເອົາບົດສະເໜີຂໍທຶນ C19RM ແບບດ່ວນ ສະບັບຫຼ້າສຸດໂດຍສະມາຊິກສົມບູນທັງໝົດ ແລະ ສະມາຊິກສຳຮອງຂອງຄະນະກຳມະການປະສານງານກອງທຶນໂລກ (CCM) ຫຼື ຜູ້ທີ່ໄດ້ຮັບມອບໝາຍໃຫ້ເປັນຕົວແທນທັງໝົດ ກໍ່ສາມາດຮັບຮອງໄດ້ເຊັ່ນດຽວກັນໃນກໍລະນີສະມາຊິກ CCM ບໍ່ສະດວກໃນການເຂົ້າຮ່ວມການຮັບຮອງດັ່ງກ່າວ. ສຳລັບສະມາຊິກທ່ານໃດບໍ່ສະດວກໃນການເຊັນຮັບຮອງບົດສະເໜີຂໍທຶນ C19RM ແບບດ່ວນນີ້ ທ່ານອາດຈະຮັບຮອງສົ່ງຜ່ານທາງອີເມວແຈ້ງໄປຍັງກອງເລຂາ CCM ເພື່ອສົ່ງຕໍ່ໄປຫາກອງທຶນໂລກ. ໃນກໍລະນີທີ່ສະມາຊິກ CCM ທ່ານໃດບໍ່ເຕັມໃຈທີ່ຈະຮັບຮອງເອົາບົດສະເໜີຂໍທຶນດັ່ງກ່າວນີ້ ສະມາຊິກທ່ານນັ້ນຄວນຈະແຈ້ງເປັນລາຍລັກອັກສອນຕໍ່ກອງທຶນໂລກ (ສົ່ງເຖິງ C19RM@theglobalfund.org) ໂດຍແຈ້ງເຫດຜົນທີ່ບໍ່ສາມາດຮັບຮອງເອົາບົດສະເໜີຂໍທຶນດັ່ງກ່າວ ແລະ ກອງທຶນໂລກກໍ່ສາມາດເຂົ້າໃຈໄດ້ວ່າ ສະມາຊິກທ່ານນັ້ນມາຈາກພາກສ່ວນໃດຂອງຄະນະກຳມະການ CCM.

ສ. ຫຼັກຖານຂອງການຮັບຮອງເອົາບົດສະເໜີຂໍທຶນ C19RM ແບບດ່ວນ ໂດຍຄະນະກຳມະການປະສານງານແຫ່ງຊາດເພື່ອຕອບໂຕ້ຕໍ່ COVID-19 ອາດຈະສົ່ງອີເມວໃນການຮັບຮອງໃຫ້ກອງເລຂາ CCM ເພື່ອສົ່ງຕໍ່ໄປຫາກອງທຶນໂລກເພື່ອເປັນເອກະສານຄັດຕິດ.

ຊ. ສຳເນົາແຜນຍຸດທະສາດແຫ່ງຊາດໃນການກະກຽມຄວາມພ້ອມຕອບໂຕ້ຕໍ່ COVID-19 ແລະ ງົບປະມານປີ 2021.

**ພາກທີ 2. ບົດສະເໜີຂໍທຶນ C19RM ແບບຄົບຊຸດ**

ຜູ້ສະໝັກພຽງແຕ່ສັງລວມເອກະສານພາກທີ 2 ຂອງແບບຟອມສະໝັກຂອງບົດສະເໜີຂໍທຶນ C19RM ແບບຄົບຊຸດ. ດັ່ງທີ່ໄດ້ກ່າວໃນໜ້າທີ່ 1 ຂອງບົດສະເໜີຂໍທຶນ C19RM ແບບຄົບຊຸດ ຕ້ອງໄດ້ເຮັດສຳເລັດ ແລະ ຍື່ນສະເໜີຕໍ່ກອງທຶນໂລກ ແລະ ຕ້ອງໄດ້ກຳນົດວັນທີຍື່ນຂໍທຶນ ໃນໜັງສືວ່າດ້ວຍການຈັດສັນທຶນ C19RM.

## 2.1 ເນື້ອໃນບົດສະເໜີຂໍທຶນ

**<u>ແນະນຳຄວາມຍາວສຳລັບການຕອບຄຳຖາມນີ້: ປະກອບມີ 2 ໜ້າ</u>**

2.1.1 ເນື້ອໃນບົດສະເໜີຂໍທຶນຂອງແຕ່ລະປະເທດ: ຜູ້ສະໝັກຕ້ອງໄດ້ອະທິບາຍໂດຍຫຍໍ້ກ່ຽວກັບປັດໄຈທີ່ສຳຄັນກ່ຽວກັບເນື້ອໃນບົດສະເໜີຂໍທຶນຂອງປະເທດຕົນເອງ ເພື່ອແຈ້ງຮູ້ກ່ຽວກັບການປັບປຸງບົດສະເໜີຂໍທຶນ C19RM ແບບຄົບຊຸດ ຊຶ່ງລວມມີລາຍລະອຽດດັ່ງຕໍ່ໄປນີ້:

ກ. ສະພາບການການລະບາດຂອງພະຍາດໃນປະຈຸບັນ, ຂະບວນການວິວັດ ແລະ ການຄາດຄະເນການລະບາດຂອງພະຍາດໃນອະນາຄົດໂດຍອີງໃສ່ຂໍ້ມູນສະບັບລ້າສຸດທີ່ມີຢູ່ (ກະລຸນາສັງລວມເອົາແຫຼ່ງຂໍ້ມູນທີ່ສາມາດນຳໃຊ້ໄດ້). ກະລຸນາຮັບຊາບວ່າການວິເຄາະໃດໆກໍ່ຕາມ ຄວນດຳເນີນບົນພື້ນຖານທີ່ມີຂໍ້ຂັດແຍ້ງດ້ວຍເຫດຜົນ (ຕົວຢ່າງ: ອາຍຸ, ເພດ ແລະ ກຸ່ມທີ່ມີຄວາມສ່ຽງສະເພາະ) ເພື່ອອຳນວຍຄວາມສະດວກໃນການຈັດລຳດັບບຸລິມະສິດ.

ຂ. ຜົນກະທົບຂອງ COVID-19 ຕໍ່ລະບົບສາທາລະນະສຸກໂດຍລວມ ເຊິ່ງລວມທັງຜົນກະທົບຕໍ່ການບໍລິການຢ່າງຕໍ່ເນື່ອງ ໂດຍສະເພາະຕໍ່ປະຊາກອນຫຼັກທີ່ມີຄວາມສ່ຽງ;

ຄ. ບົດບາດຂອງການຈັດຕັ້ງທາງສັງຄົມ ແມ່ນມີບົດບາດ ໃນການຕອບໂຕ້ຕໍ່ COVID-19 ໂດຍລວມ ຂອງແຕ່ລະປະເທດ;

ງ. ບັນດາສິ່ງທ້າທາຍທີ່ໄດ້ພົບເຫັນໃນການຕອບໂຕ້ຕໍ່ COVID-19 ຈົນເຖິງປະຈຸບັນ.

ທຸກໆເອກະສານອ້າງອີງ (ລວມທັງ NSPRP) ຄວນຄັດຕິດກັບບົດສະເໜີຂໍທຶນ C19RM ແບບຄົບຊຸດ. ກະລຸນາສັງລວມລາຍການເອກະສານຄັດຕິດຊ້ອນທ້າຍກັບແບບຟອມບົດສະເໜີຂໍທຶນ C19RM ແລະ ອ້າງອີງພາກ ແລະ ໜ້າຂອງເອກະສານທີ່ກ່ຽວຂ້ອງໃຫ້ຊັດເຈນ ເພື່ອຈະເປັນການອຳນວຍຄວາມສະດວກໃຫ້ແກ່ກອງທຶນໂລກໃນການທົບທວນບົດສະເໜີຂໍທຶນດັ່ງກ່າວ.

2.1.2 **ການມີສ່ວນຮ່ວມທີ່ມີຄວາມໝາຍຂອງຄູ່ຮ່ວມມື:** ມັນເປັນສິ່ງຈຳເປັນໃນໄລຍະການປັບປຸງບົດສະເໜີຂໍທຶນ ຢ່າງນ້ອຍຜູ້ສະໝັກກໍ່ອາດຈະໄດ້ປຶກສາຫາລືກັບຄູ່ຮ່ວມມື ດັ່ງຕໍ່ໄປນີ້:

ກ. ແຜນງານຄວບຄຸມແຫ່ງຊາດກ່ຽວກັບວຽກງານຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ;

ຂ. ສາງຜະລິດຕະພັນການແພດຂັ້ນສູນກາງ (ຫຼື ຂັ້ນທຽບເທົ່າ);

ຄ. ໂຄງການຫ້ອງທົດລອງ;

ງ. ຄູ່ຮ່ວມມືສອງຝ່າຍດ້ານວິຊາການ;

ຈ. ການຈັດຕັ້ງທາງສັງຄົມ ແລະ ປະຊາກອນຫຼັກທີ່ມີຄວາມສ່ຽງ (ລວມທັງສະມາຊິກ CCM ແລະ ຜູ້ຕາງໜ້າຊຸມຊົນທີ່ບໍ່ແມ່ນສະມາຊິກ CCM); ແລະ

ສ. ບັນດາຊຸມຊົນທີ່ໄດ້ຮັບຜົນກະທົບໜັກຈາກ COVID-19.

**ການມີສ່ວນຮ່ວມທີ່ມີຄວາມໝາຍຂອງຄູ່ຮ່ວມມືສາມາດຮັບປະກັນຜ່ານ:**

ກ. ອົງການຈັດຕັ້ງທີ່ປຶກສາໃນການປັບປຸງບົດສະເໜີຂໍທຶນ C19RM, ກອງປະຊຸມຄູ່ຮ່ວມມື, ກຸ່ມວຽກງານດ້ານວິຊາການ ແລະ ກຸ່ມຜູ້ລົງຄະແນນສຽງ;

ຂ. ການເຜີຍແຜ່ຮ່າງບົດສະເໜີຂໍທຶນ C19RM ແບບຄົບຊຸດ ໃຫ້ກັບພາກສ່ວນຕ່າງໆ ແລະ ຮ້ອງຂໍການປະກອບສ່ວນທີ່ເປັນລາຍລັກອັກສອນ; ແລະ

ຄ. ປະກາດຜ່ານທາງສາທາລະນະໂດຍໃຊ້ສື່ມວນຊົນ, ໂທລະພາບ, ວິທະຍຸ, ອິນເຕີເນັດ ຫຼື ການປະກາດທາງອີເມວເຊີນຊວນໃຫ້ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ ແລະ ປະກອບສ່ວນເຂົ້າໃນການປັບປຸງບົດສະເໜີຂໍທຶນ C19RM ແບບຄົບຊຸດ.

ກິດຈະກຳເຫຼົ່ານີ້ສາມາດໄດ້ຮັບການສະໜັບສະໜູນຜ່ານການນຳໃຊ້ເງິນງົບປະມານຂອງ CCM ທີ່ມີຢູ່ໃນເບື້ອງຕົ້ນ. ສ່ວນວ່າງົບປະມານເພີ່ມເຕີມແມ່ນເພື່ອແກ້ໄຂຄວາມຈຳເປັນໃນການມີສ່ວນຮ່ວມຢ່າງກ້ວາງຂວາງ ບໍ່ພຽງແຕ່ການມີສ່ວນຮ່ວມຂອງຜູ້ປະສານງານແຫ່ງຊາດເພື່ອຕອບໂຕ້ຕໍ່ COVID-19, ແຕ່ຍັງມີການຈັດຕັ້ງທາງສັງຄົມ ແລະ ຊຸມຊົນ ເຊິ່ງອາດຈະໄດ້ມີສ່ວນຮ່ວມຕາມຄວາມເໝາະສົມເຊັ່ນກັນ. ພາກສ່ວນໃດທີ່ຕ້ອງການທຶນເພີ່ມເຕີມເພື່ອສະໜັບສະໜູນກອງປະຊຸມສຳມະນາທີ່ມີຄວາມໝາຍພາຍໃນປະເທດ ລວມທັງບົດສະເໜີຂໍທຶນ C19RM ແບບຄົບຊຸດ, ທຳອິດຜູ້ສະໝັກ ແລະ ທີມງານພາຍໃນປະເທດນັ້ນ ຕ້ອງໄດ້ມີການປຶກສາຫາລືກັບ CCM Hub ກອງທຶນໂລກສາກ່ອນ.

ເນື່ອງຈາກວ່າການລົງທຶນຂອງລະບົບສາທາລະນະສຸກປະກອບສ່ວນເຂົ້າໃນການກຽມພ້ອມການລະບາດໃນອະນາຄົດ, CCMs ຈະຕ້ອງໄດ້ຮັບປະກັນໃນການມີສ່ວນຮ່ວມທີ່ເໝາະສົມຈາກພາກສ່ວນທີ່ກ່ຽວຂ້ອງ (ເຊັ່ນ: ຈຸດປະສານງານດ້ານລະບຽບການສາທາລະນະສຸກສາກົນ (IHR)) ແລະ ສອດຄ່ອງກັບແຜນທີ່ກ່ຽວຂ້ອງ (ຖ້າມີ) (ຕົວຢ່າງ: ແຜນດຳເນີນງານແຫ່ງຊາດເພື່ອການປະກັນສຸຂະພາບ).

ກອງປະຊຸມປຶກສາຫາລືຂອງ CCM ອາດຈະມີຜູ້ຊ່ຽວຊານດ້ານວິຊາການເພີ່ມເຕີມຕາມຄວາມຕ້ອງການເພື່ອອຳນວຍຄວາມສະດວກໃຫ້ແກ່ການວິເຄາະໂລກລະບາດ, ການເຊື່ອມສານ ແລະ ຄວາມສອດຄ່ອງລະຫວ່າງບົດສະເໜີຂໍທຶນ C19RM ແບບຄົບຊຸດ ແລະ ບູລິມະສິດແຫ່ງຊາດ.

ກະລຸນາໃຫ້ລາຍລະອຽດກ່ຽວກັບວິທີການທີ່ບັນດາຄູ່ຮ່ວມມືທີ່ໄດ້ມີສ່ວນຮ່ວມໃນການປັບປຸງ ແລະ ການຕັດສິນໃຈໃນບົດສະເໜີຂໍທຶນ C19RM ແບບຄົບຊຸດ.

2.1.3 **ການປະສານງານກັບຄະນະປະສານງານແຫ່ງຊາດເພື່ອຕອບໂຕ້ຕໍ່ COVID-19:** ຊີ້ແຈງວ່າຄະນະປະສານງານແຫ່ງຊາດເພື່ອຕອບໂຕ້ຕໍ່ COVID-19 ແລະ ບັນດາໜ່ວຍງານທີ່ຂຶ້ນກັບຄະນະປະສານງານແຫ່ງຊາດຕອບໂຕ້ຕໍ່ COVID-19 ໃຫ້ໄດ້ ປຶກສາຫາລືກ່ຽວກັບວິທີການໃນການປັບປຸງບົດສະເໜີຂໍທຶນ C19RM ແບບຄົບຊຸດ ແລະ ວິທີການນຳໄປໃຊ້ຂໍ້ມູນຈາກການປຶກສາຫາລືກັນ ເພື່ອແຈ້ງຂັ້ນຕອນການຕັດສິນໃຈກ່ຽວກັບກິດຈະກຳ / ກິດຈະກຳຕອບໂຕ້ຕໍ່ C19RM ຕາມທີ່ໄດ້ສະເໜີໄປນັ້ນ. ຜູ້ສະໝັກຍັງຕ້ອງໄດ້ສະເໜີພາບລວມຂອງການມີສ່ວນຮ່ວມໃນອະນາຄົດຂອງພວກທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດກິດຈະກຳຕອບໂຕ້ຕໍ່ C19RM ຖ້າຫາກວ່າທຶນໄດ້ຮັບການອະນຸມັດ. ກະລຸນາຮັບຊາບວ່າກິດຈະກຳມາດຕະການໃນການຄວບຄຸມ ແລະ ການສະກັດກັ້ນ COVID-19 ໃນບົດສະເໜີຂໍທຶນ C19RM ແບບຄົບຊຸດ ຈຳເປັນຕ້ອງໄດ້ຮັບການຮັບຮອງຈາກຄະນະປະສານງານແຫ່ງຊາດເພື່ອຕອບໂຕ້ຕໍ່ COVID-19.

## 2.2 ການຈັດຕັ້ງປະຕິບັດທຶນຕອບໂຕ້ຕໍ່ C19RM ໃນປີ 2020 (ຖ້າມີ)

**ແນະນຳຄວາມຍາວສຳລັບການຕອບຄຳຖາມນີ້ປະກອບມີ: 2 ໜ້າ**

2.2.1 ພຽງແຕ່ປະກອບຂໍ້ມູນພາກນີ້ໃຫ້ຄົບຖ້ວນ ໃນກໍລະນີຜູ້ສະໝັກໄດ້ຮັບທຶນ C19RM ທີ່ຜ່ານມາແລ້ວ. ຖ້າບໍ່ໄດ້ຮັບທຶນດັ່ງກ່າວ ໃຫ້ຂຽນຄຳວ່າ “N/A”.

ກ່ຽວກັບທຶນ C19RM ທີ່ຜ່ານມາ, ໃຫ້ລະບຸຈຳນວນທຶນທີ່ໄດ້ນຳໃຊ້ໄປແລ້ວທໍ່ໃດ ແລະ ມີຄວາມມຸ່ງໝັ້ນຈະນຳໃຊ້ອີກຫຼາຍທໍ່ໃດ ແລະ ມີຜົນສຳເລັດອັນໃດແດ່. ນອກຈາກນີ້ ໃຫ້ອະທິບາຍບົດຮຽນທີ່ຖອດຖອນໄດ້ ແລະ ສິ່ງທ້າທາຍທີ່ໄດ້ພົບເຫັນໃນລະຫວ່າງຄວາມຫຼ້າຊ້າໃນການຈັດຕັ້ງປະຕິບັດ ຫຼື ບັນຫາໃນການໃຫ້ບໍລິການ ແລະ ມີບັນຫາອື່ນໆທີ່ກ່ຽວຂ້ອງກັບການຕິດຕາມແລະປະເມີນຜົນ, ຜົນສຳເລັດໃນການລາຍງານ ແລະ ບັນຫາຂໍ້ມູນດ້ານສາທາລະນະສຸກ ເຊິ່ງຈະສົ່ງຜົນກະທົບຕໍ່ການຍື່ນບົດສະເໜີຂໍທຶນ C19RM ແບບຄົບຊຸດ.

2.2.2 ໂດຍສະທ້ອນໃຫ້ເຫັນເຖິງປະສົບການຈາກການປະຕິບັດທຶນ C19RM ໃນປີ 2020, ຜູ້ສະໝັກໄດ້ຮັບການຊຸກຍູ້ໃຫ້ອະທິບາຍບົດຮຽນທີ່ໄດ້ຮັບຜ່ານມາ ແລະ ຈະເປັນວິທີໃນການປັບປຸງບົດສະເໜີຂໍທຶນ C19RM ແບບຄົບຊຸດ. ວິທີການດັ່ງກ່າວລວມມີການສະທ້ອນເຖິງຄວາມສຳເລັດ ແລະ ສິ່ງທ້າທາຍໃນການຈັດຕັ້ງປະຕິບັດກິດຈະກຳທີ່ໄດ້ກຳນົດໄວ້ໃນພາກສ່ວນໜຶ່ງສຳລັບທຶນ C19RM ປີ 2020. ຍົກຕົວຢ່າງ, ຜູ້ສະໝັກສາມາດອະທິບາຍສິ່ງທີ່ເຮັດວຽກໄດ້ດີ ແລະ ສາມາດເຮັດແບບທົດແທນກັນໄດ້ ຫຼື ສາມາດປັບປຸງເພີ່ມທະວີວິທີການໃດທີ່ບໍ່ໄດ້ຮັບຜົນຕາມທີ່ຄາດໄວ້ ຈະຕ້ອງໄດ້ຮັບການແກ້ໄຂ ພ້ອມທັງຈະມີວິທີການແກ້ໄຂບັນດາອຸປະສັກ ແລະ ຂໍ້ຈຳກັດນັ້ນ ເພື່ອເພີ່ມທະວີໃຫ້ໄດ້ຮັບຜົນດີສຳລັບວຽກງານການຕອບໂຕ້.

## 2.3 ບົດສະເໜີຂໍທຶນ ແລະ ການຈັດລຳດັບບຸລິມະສິດ

ໝາຍເຫດ: ຜູ້ສະໝັກຈະຕ້ອງໄດ້ຮັບການແນະນຳໃຫ້ຮູ້ຈັກຄຸ້ນເຄີຍກັບຮ່າງແບບຟອມແຜນງົບປະມານຂອງ C19RM, ຕາຕະລາງເວລາໃນການຂໍທຶນ C19RM, ກອບໂມດູນ Modular-19 Modular Framework ແລະ ຂໍ້ມູນດ້ານວິຊາການ COVID-19 ກ່ອນທີ່ຈະກຽມຕື່ມຂໍ້ມູນໃສ່ໃນພາກ 2.3 ຂອງບົດສະເໜີຂໍທຶນ.

<u>ແນະນຳຄວາມຍາວສຳລັບການຕອບຄຳຖາມນີ້ປະກອບມີ: 3 ໜ້າ</u>

2.3.1 (ບ່ອນທີ່ກ່ຽວຂ້ອງ) ຜູ້ສະໝັກຈະຕ້ອງອະທິບາຍເຖິງບັນຫາດ້ານການບໍລິການວຽກງານຕ້ານ HIV (ໂດຍສະເພາະປະຊາກອນຫຼັກ ແລະ ຜູ້ທີ່ມີຄວາມສ່ຽງ) ແລະ ຖ້າກອງທຶນໂລກໄດ້ສະໜັບສະໜູນວຽກງານຕ້ານເອດສ໌ ຊຶ່ງໄດ້ລວມເຂົ້າກັບທຶນທີ່ໄດ້ຈັດສັນສຳລັບ COVID-19 ເພື່ອແກ້ໄຂຊ່ອງຫວ່າງທີ່ສຳຄັນເກີດຂຶ້ນທີ່ເປັນຜົນມາຈາກ COVID-19. ຜູ້ສະໝັກຕ້ອງຂໍໃຫ້ພິຈາລະນາທຸກຂໍ້ມູນທີ່ມີຢູ່ທີ່ມີບັນຫາດ້ານການບໍລິການລວມທັງການສຳຫຼວດຂັ້ນພື້ນຖານເຊັ່ນ ການຕິດຕາມທີ່ມີການນຳພາໂດຍຊຸມຊົນ (CLM) ແລະ ການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອ.

2.3.2 (ບ່ອນທີ່ກ່ຽວຂ້ອງ) ຜູ້ສະໝັກຈະຕ້ອງອະທິບາຍເຖິງບັນກາດ້ານການບໍລິການວຽກງານຄວບຄຸມວັນນະໂລກ (ໂດຍສະເພາະປະຊາກອນຫຼັກ ແລະ ຜູ້ທີ່ມີຄວາມສ່ຽງ) ແລະ ຖ້າກອງທຶນໂລກໄດ້ສະໜັບສະໜູນວຽກງານວັນນະໂລກ ຊຶ່ງໄດ້ລວມເຂົ້າກັບທຶນທີ່ໄດ້ຈັດສັນສຳລັບ COVID-19 ເພື່ອແກ້ໄຂຊ່ອງຫວ່າງທີ່ສຳຄັນເກີດຂຶ້ນທີ່ເປັນຜົນມາຈາກ COVID-19. ຜູ້ສະໝັກຕ້ອງຂໍໃຫ້ພິຈາລະນາທຸກຂໍ້ມູນທີ່ມີຢູ່ທີ່ມີບັນຫາດ້ານການບໍລິການລວມທັງການສຳຫຼວດຂັ້ນພື້ນຖານເຊັ່ນ ການຕິດຕາມທີ່ມີການນຳພາໂດຍຊຸມຊົນ (CLM) ແລະ ການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອ.

2.3.3 (ບ່ອນທີ່ກ່ຽວຂ້ອງ) ຜູ້ສະໝັກຈະຕ້ອງອະທິບາຍເຖິງບັນກາດ້ານການບໍລິການວຽກງານໄຂ້ຍຸງ (ໂດຍສະເພາະປະຊາກອນຫຼັກ ແລະ ຜູ້ທີ່ມີຄວາມສ່ຽງ) ແລະ ຖ້າກອງທຶນໂລກໄດ້ສະໜັບສະໜູນວຽກງານຕ້ານ ແລະ ຄວບຄຸມໄຂ້ຍຸງ ຊຶ່ງໄດ້ລວມເຂົ້າກັບທຶນທີ່ໄດ້ຈັດສັນ COVID-19 ເພື່ອແກ້ໄຂຊ່ອງຫວ່າງສຳຄັນທີ່ເກີດຂຶ້ນທີ່ເປັນຜົນມາຈາກ COVID-19. ຕ້ອງໄດ້ລະບຸໂດຍສະເພາະວ່າພາຍໃນປະເທດມີການໂຄສະນາຕ້ານໄຂ້ຍຸງໃນໄລຍະນີ້

(IRS, ITN ແລະ / ຫຼື SMC). ຖ້າໄດ້ປະຕິບັດວຽກງານດັ່ງກ່າວ ກໍ່ຄວນຈະລະບຸວ່າ PPE ທີ່ກ່ຽວຂ້ອງ ແລະ ເອົາເຂົ້າໃສ່ໃນບົດສະເໜີສະບັບນີ້ ຫຼື ຖ້າຫາກວ່າເອົາລວມເຂົ້າໂດຍຜ່ານທຶນຊ່ວຍເຫຼືອຂອງກອງທຶນໂລກ ແລະ / ຫຼື ແຫຼ່ງທຶນອື່ນໆ ໃນກໍລະນີທີມີການສະໜອງທຶນບໍ່ພຽງພໍ. ຜູ້ສະໝັກຕ້ອງຂໍໃຫ້ພິຈາລະນາທຸກຂໍ້ມູນແຫຼ່ງທຶນທີ່ມີຢູ່ ກ່ຽວກັບບັນຫາດ້ານການບໍລິການລວມທັງການສໍາຫຼວດຂັ້ນພື້ນຖານ, ການຕິດຕາມທີ່ນໍາພາໂດຍຊຸມຊົນ (CLM) ແລະ ການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອ.

2.3.4 ຜູ້ສະໝັກຈະຕ້ອງໄດ້ອະທິບາຍຜົນກະທົບຂອງ COVID-19 ກ່ຽວກັບ**ຄວາມຮຸນແຮງຕໍ່ບົດບາດຍິງ - ຊາຍ ແລະ ສິດທິມະນຸດ** ເຊິ່ງອາດຈະປະກອບມີຄວາມອັນຕະລາຍທາງຮ່າງກາຍ, ທາງເພດ, ທາງດ້ານຈິດໃຈ ຫຼື ທາງເສດຖະກິດ ຫລື ຄວາມທຸກທໍລະມານທີ່ຖືກກະທົບໃສ່ບຸກຄົນເນື່ອງຈາກບົດບາດຍິງ - ຊາຍ ແລະ / ຫຼື ບັນຫາຄວາມບໍ່ສະເໝີພາບເທົ່າທຽມກັນໃນການເຂົ້າເຖິງການບໍລິການວຽກງານຕ້ານເອດສ໌, ວັນນະ ໂລກ ແລະ ໄຂ້ຍຸງ ແລະ COVID-19 ເຊັ່ນ: ການລົບກວນ, ການຈໍາແນກລັງກຽດ. ຖ້າບົດສະເໜີຂໍທຶນ C19RM ແບບຄົບຊຸດ ບໍ່ໄດ້ລວມເອົາກິດຈະກໍາເພື່ອຕອບໂຕ້ສະເພາະຂອງຊຸມຊົນ, ສິດທິ ແລະ ບົດບາດຍິງ-ຊາຍ (CRG), ຄວາມທ້າທາຍ ແລະ ຄວາມຈໍາເປັນອັນຮີບດ່ວນ, ໃຫ້ລະບຸລາຍລະອຽດກ່ຽວກັບວິທີການແກ້ໄຂໂດຍຜ່ານແຫຼ່ງທຶນອື່ນໆ.

2.3.5 ຜູ້ສະໝັກຕະຕ້ອງອະທິບາຍວິທີການຂອງຜູ້ສະໝັກ ເພື່ອໃຫ້ຈັດລໍາດັບກິດຈະກໍາບຸລິມະສິດ ແລະ ກິດຈະກໍາຕ່າງໆ ໄດ້ເຊື່ອມເຂົ້າກັບບົດສະເໜີຂໍທຶນ C19RM ແບບຄົບຊຸດກັບເສົາຄໍ້າຂອງ NSPRP. ວິທີການຈັດລໍາດັບບຸລິມະສິດຄວນໃຫ້ສອດຄ່ອງກັບສະພາບການຂອງປະເທດ ແລະ ອີງໃສ່ອົງປະກອບທີ່ເປັນບຸລິມະສິດໃນແຜນຍຸດທະສາດ NSPRP (ຕາມຄວາມເໝາະສົມ) ຫລື ໄດ້ຮັບການພິຈາລະນາແນະນໍາຈາກພາກສ່ວນອື່ນໆ ເຊັ່ນ: ສະຖານະການການລະບາດໃນປະຈຸບັນ ແລະ ການຄາດຄະເນການລະບາດໃນອະນາຄົດ.

2.3.6 ການນໍາໃຊ້ຕາຕະລາງທີ່ສະໜອງໃຫ້, ຜູ້ສະໝັກຕ້ອງໄດ້ສະເໜີລາຍລະອຽດເຫດຜົນທີ່ເໝາະສົມສໍາລັບກິດຈະກໍາທີ່ໄດ້ເລືອກໄວ້ແລ້ວ ແລະ ກິດຈະກໍາຫຼັກທີ່ກ່ຽວຂ້ອງທີ່ໄດ້ສະເໜີພາຍໃຕ້ທຶນຈັດສັນເບື້ອງຕົ້ນສໍາລັບ C19RM ຂອງບົດສະເໜີຂໍທຶນ C19RM ແບບຄົບຊຸດ. ກະລຸນາຢືນຢັນວ່າບົດສະເໜີດັ່ງກ່າວຕ້ອງສອດຄ່ອງກັບຄູ່ມື ແລະ ຄໍາແນະດ້ານວິຊາການຂອງ C19RM (ເບິ່ງຂໍ້ມູນອ້າງອີງຕໍ່ໄປນີ້), ພ້ອມທັງຄູ່ມືແນະນໍາຂອງ WHO ແລະ ວິທີທີ່ສະໜັບສະໜູນຕໍ່ແຜນຍຸດທະສາດ NSPRP.

ສໍາລັບພາກນີ້ອະນຸຍາດໃຫ້ຜູ້ສະໝັກສາມາດອະທິບາຍລະອຽດກ່ຽວບັນດາກັບກິດຈະກໍາ ແລະ ກິດຈະກໍາບຸລິມະສິດພາຍໃຕ້ທຶນຊ່ວຍເຫຼືອແຕ່ລະໝວດ. ຂໍ້ມູນຂ້າງລຸ່ມນີ້ຄວນປະຂໍ້ມູນໃຫ້ຄົບຖ້ວນແຕ່ລະກິດຈະກໍາ. ຜູ້ສະໝັກຄວນຈະຂໍເພີ່ມແຜນກິດຈະກໍາ (ຊື່ກິດຈະກໍາ / ກິດຈະກໍາຫຼັກ, ເຫດຜົນ, ຄາດຄະເນຜົນໄດ້ຮັບ ແລະ ຄາດຄະເນການລົງທຶນ) ສໍາລັບແຕ່ລະກິດຈະກໍາທີ່ໄດ້ສະເໜີ:

| | |
|---|---|
| **ກິດຈະກໍາ ແລະ ກິດຈະກໍາຫຼັກ** | ລາຍຊື່ກິດຈະກໍາຕ້ອງສອດຄ່ອງກັບບຸລິມະສິດຢູ່ໃນບົດສະເໜີຂໍທຶນສະບັບນີ້ ລົງຊື່ສະເພາະກິດຈະກໍາຫຼັກ / ກິດຈະກໍາທີ່ມີບູລິມະສິດສູງເທົ່ານັ້ນ |
| **ເຫດຜົນ** | ລາຍລະອຽດຂອງການວິເຄາະ/ເຫດຜົນທີ່ເຮັດໃຫ້ມີການວາງກິດຈະກໍາ/ກິດຈະກໍາຫຼັກ |
| **ຜົນໄດ້ຮັບ ທີ່ຄາດໄວ້** | ລາຍລະອຽດຂອງຜົນກະທົບຂອງບັນດາກິດຈະກໍາ/ກິດຈະກໍາຫຼັກຕໍ່ປະຊາກອນທີ່ມີຜົນກະທົບ ແລະ / ຫຼື ລະບົບສາທາລະນະສຸກ |
| **ການລົງທຶນ ທີ່ຄາດໄວ້** | ຕົວຊີ້ບອກເຖິງຈໍານວນທຶນສະໜັບສະໜູນຂອງກອງທຶນໂລກສໍາລັບກິດຈະກໍານີ້. ກະລຸນາອ້າງອີງເຖິງງົບປະມານລວມຂອງ C19RM ເພື່ອເຮັດໃຫ້ວຽກງານດັ່ງກ່າວໄດ້ປະສົບຜົນສໍາເລັດ |

ບັນດາກິດຈະກຳຄວນສອດຄ່ອງກັບໂຄງການກອບໂມດູນວຽກງານ COVID-19 (ເບິ່ງຂໍ້ມູນອ້າງອີງຕໍ່ໄປນີ້) ເຊິ່ງງົບປະມານລວມຂອງ C19RM ສາມາດແບ່ງອອກດັ່ງຕໍ່ໄປນີ້:

ກ. **ກິດຈະກຳການຄວບຄຸມ ແລະ ສະກັດກັ້ນ COVID-19** ຄວນສອດຄ່ອງກັບຄູ່ມື ແລະ ຄຳແນະນຳດ້ານວິຊາການຂອງ C19RM (ເບິ່ງຂໍ້ມູນອ້າງອີງຕໍ່ໄປນີ້), ຄູ່ມືແນະນຳດ້ານວິຊາການຂອງ WHO ສາມາດເປັນແບບຟອມສ່ວນໜຶ່ງຂອງແຜນຍຸດທະສາດ NSPRP. ໂດຍສອດຄ່ອງກັບກອບໂມດູນວຽກງານ COVID-19, ບັນດາກິດຈະກຳດັ່ງກ່າວໄດ້ຈັດເຂົ້າໃນໝວດດັ່ງຕໍ່ໄປນີ້:

1. ການວາງແຜນວຽກງານການປະສານງານລະດັບປະເທດ (NSPRP ເສົາຄ້ຳທີ 1);
2. ການສື່ສານຄວາມສ່ຽງ (NSPRP ເສົາຄ້ຳທີ 2);
3. ການເຝົ້າລະວັງ - ການສືບສວນກ່ຽວກັບພະຍາດລະບາດ ແລະ ການຕິດຕໍ່ຕິດຕາມ (NSPRP ເສົາຄ້ຳທີ 3);
4. ການບົ່ງມະຕິ ແລະ ການກວດ COVID-19 (NSPRP ເສົາຄ້ຳທີ 5);
5. ການປ້ອງກັນ ແລະ ຄວບຄຸມການຕິດເຊື້ອ ແລະ ການປົກປ້ອງສຸຂະພາບກຳລັງແຮງງານ (COVID-19) (NSPRP ເສົາຄ້ຳທີ 6); ແລະ
6. ການຄຸ້ມຄອງກໍລະນີ, ການປະຕິບັດງານທາງຄລີນິກ ແລະ ການປິ່ນປົວພະຍາດ (NSPRP ເສົາຄ້ຳທີ 7).

ຂ. **ມາດຕະການຫຼຸດຜ່ອນຄວາມສ່ຽງທີ່ກ່ຽວຂ້ອງກັບ (COVID-19) ສຳລັບວຽກງານຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ (NSPRP ເສົາຄ້ຳທີ 9)** ຈະຕ້ອງແຈ້ງໃຫ້ຊາບໂດຍ ຄູ່ມື ແລະ ຄຳແນະນຳດ້ານວິຊາການຂອງ C19RM (ເບິ່ງຂໍ້ມູນອ້າງອີງຕໍ່ໄປນີ້). ຂໍ້ມູນອ້າງອີງດັ່ງກ່າວນີ້ ປະກອບມີຄຳແນະນຳດ້ານວິຊາການຂອງກອງທຶນໂລກກ່ຽວກັບວຽກງານຕ້ານເອດສ໌, ວັນນະໂລກ, ໄຂ້ຍຸງ ແລະ RSSH ພ້ອມທັງຄຳແນະນຳເພີ່ມເຕີມຈາກຄູ່ຮ່ວມງານທີ່ໃຫ້ຄຳແນະນຳສະເພາະກ່ຽວກັບວິທີການຮັບປະກັນໂຄງການພະຍາດຕິດຕໍ່ ແລະ ການເຂົ້າເຖິງການບໍລິການທີ່ຈຳເປັນຂອງປະຊາຊົນໂດຍຜ່ານວິກິດ COVID-19.

ຄ. **ການເສີມຂະຫຍາຍວຽກງານຫຼັກດ້ານສາທາລະນະສຸກ ແລະ ລະບົບການຕອບໂຕ້ທີ່ນຳພາໂດຍຊຸມຊົນ** ຄວນສຸມໃສ່ກິດຈະກຳທີ່ຈຳເປັນເພື່ອປັບຕົວເຂົ້າກັບ COVID-19 ຊ່ວຍໃຫ້ການຮັກສາ ແລະ ສິ່ງຜົນໃຫ້ວຽກງານຕ້ານເອດສ໌, ວັນນະໂລກ ແລະ ໄຂ້ຍຸງທີ່ມີຢູ່ແລ້ວ ເພື່ອສະໜັບສະໜູນການຕອບໂຕ້ຕໍ່ COVID-19 ພາຍໃນປະເທດ. ກິດຈະກຳດັ່ງກ່າວນີ້ ຄວນບັນທຶກໃສ່ຄູ່ມື ແລະ ຄຳແນະນຳດ້ານເຕັກນິກຂອງ C19RM (ເບິ່ງຂໍ້ມູນອ້າງອີງຕໍ່ໄປນີ້). ໂດຍສອດຄ່ອງກັບກອບໂມດູນ ແລະ ກິດຈະກຳຕ່າງໆທີ່ໄດ້ລວມເຂົ້າຢູ່ໃນໝວດດັ່ງຕໍ່ໄປນີ້:

1. ລະບົບການເຝົ້າລະວັງ (NSPRP ເສົາຄ້ຳທີ 3);
2. ລະບົບຫ້ອງທົດລອງ (NSPRP ເສົາຄ້ຳທີ 5);
3. ລະບົບການຄຸ້ມຄອງຜະລິດຕະພັນສຸຂະພາບ ແລະ ຄຸ້ມຄອງສິ່ງເສດເຫຼືອ (NSPRP ເສົາຄ້ຳທີ 6);
4. ການປ້ອງກັນກ່ຽວກັບຄວາມຮຸນແຮງຕໍ່ບົດບາດຍິງຊາຍ ແລະ ການສະກັດກັ້ນຄວາມຮຸນແຮງ;
5. ການຕອບໂຕ້ຕໍ່ບັນຫາດ້ານສິດທິມະນຸດ ແລະ ບົດບາດຍິງຊາຍທີ່ກ່ຽວຂ້ອງກັບການບໍລິການ;
6. COVID-19 CSS: ການຕິດຕາມການນຳພາໂດຍຊຸມຊົນ;
7. COVID-19 CSS: ການສະໜັບສະໜູນ ແລະ ການຄົ້ນຄວ້າທີ່ນຳພາໂດຍຊຸມຊົນ;
8. COVID-19 CSS: ການລະດົມສັງຄົມ; ແລະ
9. COVID-19 CSS: ອົງການຈັດຕັ້ງທີ່ອີງໃສ່ຊຸມຊົນໃນການສ້າງຂີດຄວາມສາມາດດ້ານສະຖາບັນ.

ຜູ້ສະໝັກຄວນສັງເກດວ່າຜະລິດຕະພັນສຸຂະພາບ ແລະ ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງ (ຄ່າທຳນຽມ PSA, ຄ່າຂົນສົ່ງ ແລະ ປະກັນໄພ, ຄ່າທຳນຽມ QA / QC, ຄ່າທຳນຽມພາສີ, ຄ່າຄັງສິນຄ້າພາຍໃນປະເທດ ແລະ ຄ່າໃຊ້ຈ່າຍໃນການເກັບຮັກສາ, ຄ່າໃຊ້ຈ່າຍໃນການແຈກຢາຍຢູ່ພາຍໃນປະເທດ ແລະ ຄ່າໃຊ້ຈ່າຍອື່ນໆທີ່ກ່ຽວຂ້ອງກັບ PSM, ຄ່າໃຊ້ຈ່າຍທັງໝົດ ແມ່ນຢູ່ພາຍໃຕ້ຄ່າໃຊ້ຈ່າຍໝວດທີ່ 7) ຄວນຈະເອົາລວມເຂົ້າໃນຂໍ້ (ກ) ການຄຸ້ມຄອງ COVID-19 ໂດຍກົງ ແລະ ຂໍ້ (ຂ) ການຫຼຸດຜ່ອນຜົນກະທົບຂອງການຄຸ້ມຄອງ COVID-19 ກ່ຽວກັບການບໍລິການວຽກງານຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ. ກິດຈະກຳເສີມສ້າງລະບົບການຄຸ້ມຄອງຜະລິດຕະພັນດ້ານສາທາລະນະສຸກ (ເຊັ່ນ: ລະບົບການປົກຄອງຂອງ HPM / SC, ລະບຽບການ, ຄວາມສາມາດໃນການເກັບຮັກສາ ແລະ ການແຈກຢາຍ ແລະ ລະບົບການຈັດການສິ່ງເສດເຫຼືອ) ຄວນເອົາລວມເຂົ້າຢູ່ໃນຂໍ້ (ຄ) ການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບສາທາລະນະສຸກ ແລະ ຊຸມຊົນ.

2.3.7 ຜູ້ສະໝັກຄວນຈະຍື່ນສະເໜີຄວາມຕ້ອງການທີ່ເປັນບຸລິດມະສິດສູງຕາມລາດັບ ນອກເໜືອຈາກຈານວນເງິນທີ່ໄດ້ຮັບການຈັດສັນເບື້ອງຕົ້ນ ໂດຍນຳໃຊ້ຕາຕະລາງທີ່ລະບຸໄວ້ໃນແບບຟອມບົດສະເໜີຂໍທຶນ C19RM, ຜູ້ສະໝັກຄວນຈະຕ້ອງອະທິບາຍ / ເຫດຜົນໂດຍຫຍໍ້ສໍາລັບກິດຈະກໍາ ແລະ ບັນດາກິດຈະກຳຫຼັກທີ່ກ່ຽວຂ້ອງທີ່ໄດ້ສະເໜີໃນບົດສະເໜີຂໍທຶນ C19RM ແບບຄົບຊຸດໃນລັກສະນະທີ່ເປັນບູລິມະສິດ. ບັນດາກິດຈະກຳຄວນໄດ້ຮັບການຈັດຕັ້ງເພື່ອໃຫ້ມີຄວາມສຳຄັນ ສໍາລັບຜົນໄດ້ຮັບຂອງໂຄງການຈາກລະດັບສູງ ຫາ ກາງ ຫາ ຕໍ່າ ພ້ອມທັງຊີ້ແຈງວິທີການຢ່າງຄົບຖ້ວນສໍາລັບກັບກິດຈະກໍາທີ່ໄດ້ສະເໜີໃຫ້ມີການຈັດຕັ້ງປະຕິບັດພາຍໃຕ້ບ້ວງທຶນຈັດສັນສ່ວນໜຶ່ງໃນເບື້ອງຕົ້ນສໍາລັບທຶນຊ່ວຍເຫຼືອ C19RM ຕາມທີ່ໄດ້ລະບຸໄວ້ໃນບົດສະເໜີຂໍທຶນ C19RM ແບບຄົບຊຸດ.

## 2.4 ການຈັດຕັ້ງປະຕິບັດ

**<u>ແນະນຳຄວາມຍາວສຳລັບການຕອບຄຳຖາມນີ້ປະກອບມີ: 2 ໜ້າ</u>**

2.4.1 ກ່ອນທີ່ຈະໄດ້ຮັບທຶນ C19RM, ກອງທຶນໂລກຈະທົບທວນມາດຕະການຫຼຸດຜ່ອນຄວາມສ່ຽງທີ່ເກີດຂຶ້ນໃນລະຫວ່າງການຈັດຕັ້ງປະຕິບັດເພື່ອຮັບປະກັນການຈັດສົ່ງ ແລະ / ຫຼື ກິດຈະກໍາທີ່ໄດ້ຮັບການອະນຸມັດຢ່າງມີປະສິດທິພາບ ແລະ ມີປະສິດທິຜົນ. ເພາະສະນັ້ນ, ຜູ້ສະໝັກຄວນຈະໃຫ້ລາຍລະອຽດກ່ຽວກັບການຈັດຕັ້ງປະຕິບັດຕາມທີ່ໄດ້ສະເໜີ ລວມທັງຜູ້ຮັບທຶນຕົ້ນຕໍ (PR) ແລະ ຜູ້ຮັບທຶນຍ່ອຍ (SR) (ແລະ ໜ່ວຍງານຈັດຕັ້ງປະຕິບັດອື່ນໆ) ພ້ອມທັງວິທີການທີ່ພວກເຂົາຈະສະໜັບສະໜູນ ເພື່ອເຮັດໃຫ້ໂຄງການໄດ້ຮັບປະສິດທິພາບ.

PR ແລະ SR ຄວນເປັນຜູ້ທີ່ເຄີຍປະຕິບັດກອງທຶນໂລກທີ່ມີຢູ່ແລ້ວ ເຊິ່ງເປັນຜູ້ທີ່ກໍາລັງຈັດຕັ້ງປະຕິບັດທຶນຊ່ວຍເຫຼືອຂອງກອງທຶນໂລກໃນເວລາທີ່ຍື່ນສະໝັກ[6]. ຜູ້ຈັດຕັ້ງປະຕິບັດໃໝ່ອາດຈະຖືກພິຈາລະນາໂດຍກອງທຶນໂລກໃນສະພາບການພິເສດ ໂດຍອີງໃສ່ການຈັດການຮັບປະກັນທີ່ເພິ່ງພໍໃຈ ແລະ ຄວາມສາມາດໃນການຈັດຕັ້ງປະຕິບັດກິດຈະກໍາທີ່ສະເໜີໂດຍໄວ. ກະລຸນາເບິ່ງໃນພາກທີ 1 ຂອງຄູ່ມືຄຳແນະນຳ C19RM ສໍາລັບລາຍລະອຽດເພີ່ມເຕີມ (ເບິ່ງຂໍ້ມູນອ້າງອີງຕໍ່ໄປນີ້).

[6] ນີ້ປະກອບມີຜູ້ຮັບທຶນພາຍໃຕ້ວິທີການສໍາລັບການມີສ່ວນຮ່ວມກັບປະເທດທີ່ບໍ່ມີເງື່ອນໄຂໃນວິກິດການທີ່ໄດ້ຮັບການອະນຸມັດຈາກສະພາບໍລິຫານຜ່ານ GF / B39 / DP04.

**ຜູ້ສະໝັກຄວນຈະລວມເອົາລາຍລະອຽດດັ່ງຕໍ່ໄປນີ້:**

**ກ) ການຄຸ້ມຄອງຜະລິດຕະພັນດ້ານສາທາລະນະສຸກ:**

i. ວິທີການຈັດການຜະລິດຕະພັນດ້ານສາທາລະນະສຸກປະເພດຕ່າງໆ (ລວມທັງການຄາດຄະເນ / ປະລິມານ, ການຈັດຊື້, ການເກັບຮັກສາ, ການແຈກຢາຍ ແລະ ການຕິດຕາມຜ່ານລະບົບ LMIS) ແລະ ແຈກຢາຍໃຫ້ສະຖານທີ່ບໍລິການ (ລວມທັງຫ້ອງທົດລອງ) ແລະ ຈົນເຖິງຜູ້ໄດ້ຮັບການຊ່ວຍເຫຼືອຂັ້ນພື້ນຖານ ຫຼັງຈາກສິນຄ້າໄດ້ຮັບການຈັດຊື້ ແລະ ໄດ້ນຳສົ່ງເຖິງພາຍໃນປະເທດ;

ii. ບໍ່ວ່າກົນໄກການຈັດຊື້, ການເກັບຮັກສາ ແລະ ການແຈກຢາຍລ້ວນແລ້ວແຕ່ຄືກັນ/ແຕກຕ່າງກັບຈຸດມອບຮັບການບໍລິການວຽກງານຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ ໃນປັດຈຸບັນພາຍໃຕ້ການຊ່ວຍເຫຼືອຂອງກອງທຶນໂລກທີ່ມີຢູ່ແລ້ວ;

iii. ຄວາມສ່ຽງດ້ານການບໍລິຫານຜະລິດຕະພັນດ້ານສາທາລະນະສຸກທີ່ໄດ້ຄາດໄວ້ລ່ວງໜ້າ (ຖ້າມີ) ໂດຍຜູ້ສະໝັກຈະຕ້ອງໄດ້ປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ (ເຊັ່ນຄວາມສ່ຽງທີ່ກ່ຽວຂ້ອງກັບການຮັບປະກັນຄຸນນະພາບ, ລະບຽບການ ແລະ ການຂຶ້ນທະບຽນ, ລະບົບການສະໜອງແບບຕ່ອງໂສ້ພາຍໃນປະເທດ, ພິທີຂັ້ນຕອນ / ຂໍ້ສະເໜີແນະນຳລະດັບຊາດ, ລະບົບຫ້ອງທົດລອງ ແລະ ການຄຸ້ມຄອງສິ່ງເສດເຫຼືອ).

**ຂ) ກະແສການເງິນ**: ໃນເວລາທີ່ໄດ້ຮັບທຶນຈາກ PR, ເຊິ່ງໜ່ວຍງານທ້ອງຖິ່ນ / ພະແນກຕ່າງໆຂອງຝ່າຍລັດຖະບານ (ຖ້າມີ) ກໍ່ຈະໄດ້ຮັບທຶນສຳລັບກິດຈະກຳຕາມທີ່ໄດ້ສະເໜີມານັ້ນບໍ່? SR / ຜູ້ໃຫ້ບໍລິການຈະຢູ່ພາຍໃຕ້ທຶນຊ່ວຍເຫຼືອບ້ອງນີ້ບໍ່? ຜູ້ສະເໜີຂໍທຶນຄວນຈະລວມເອົາບົດສະຫຼຸບຂອງກະແສທຶນ ແລະ ຄວາມສ່ຽງດ້ານການຄວບຄຸມທີ່ຄາດໄວ້ລ່ວງໜ້າ (ຖ້າມີ) ພ້ອມທັງມາດຕະການຫຼຸດຜ່ອນຄວາມສ່ຽງທີ່ອາດຈະເກີດຂຶ້ນ. ຜູ້ສະເໜີໝັກຂໍທຶນສາມາດຄັດຕິດແຜນທີ່ການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອທີ່ກ່ຽວຂ້ອງເພື່ອເປັນປະໂຫຍດໃນການອະທິບາຍ.

**ຄ) ກະແສຂໍ້ມູນ:** ກະແສຂໍ້ມູນ ແລະ ການລາຍງານຈາກຈຸດໃຫ້ບໍລິການ. ໜ່ວຍງານໃດທີ່ຈະຮັບຜິດຊອບໃນການລາຍງານຂໍ້ມູນໃຫ້ແກ່ PR (ແລະ ລາຍງານຕໍ່ໃຫ້ກອງທຶນໂລກ) ກ່ຽວກັບການຈັດຕັ້ງປະຕິບັດກິດຈະກຳທີ່ໄດ້ສະເໜີ? ຜູ້ສະໝັກຂໍທຶນ ຄວນປະກອບມີບົດສະຫລຸບລາຍງານຂອງການຕິດຕາມ ແລະ ປະເມີນຜົນ, ການມີຂໍ້ມູນ ແລະ ຄຸນນະພາບຂໍ້ມູນຄວາມສ່ຽງທີ່ຄາດລ່ວງໜ້າ (ຖ້າມີ) ພ້ອມທັງມາດຕະການຫຼຸດຜ່ອນຄວາມສ່ຽງທີ່ອາດຈະເກີດຂຶ້ນ.

**ງ) ການປະສານງານ ແລະ ການຕິດຕາມກວດກາ:** ອະທິບາຍກົນໄກການຄຸ້ມຄອງ ແລະ ການຕິດຕາມກວດກາທີ່ມີຢູ່ໃນມາດຕະການແຫ່ງຊາດໃນການຕອບໂຕ້ຕໍ່ COVID-19, ລວມທັງການປະເມີນປະລິມານ ຫຼື ຄວາມຕ້ອງການອັນຮີບດ່ວນ, ການຈັດຊື້, ການເກັບຮັກສາ, ການລາຍງານ ແລະ ການລາຍງານຜະລິດຕະພັນ COVID-19. ໄລຍະການຕິດຕາມກວດກາແຕ່ລະປະເພດໃດ (ລວມທັງການຕິດຕາມການນຳພາໂດຍຊຸມຊົນ) ຈະເຮັດໃນລະດັບຕ່າງໆ; ຂັ້ນທ້ອງຖິ່ນ, ພາກພື້ນ ແລະ ສຸດທ້າຍຈະນຳພາໂດຍຄະນະສະເພາະກິດແຫ່ງຊາດໃນການຕອບໂຕ້ຕໍ່ COVID-19 ແລະ PR?. CCM ແລະ PR ຈະຕິດຕາມຄວາມຄືບໜ້າແນວໃດ ເພື່ອຈັດຕັ້ງປະຕິບັດກິດຈະກຳທີ່ວາງແຜນໄວ້? ຜູ້ສະໝັກຂໍທຶນຄວນປະກອບມີບົດສະຫຼຸບກ່ຽວກັບການຄຸ້ມຄອງ ແລະ ການຄວບຄຸມຄວາມສ່ຽງລ່ວງໜ້າ (ຖ້າມີ), ພ້ອມທັງມາດຕະການຫຼຸດຜ່ອນຄວາມສ່ຽງທີ່ອາດຈະເກີດຂຶ້ນ.

2.4.2 ໃນພາກນີ້, ຜູ້ສະໝັກຂໍທຶນຄວນອະທິບາຍເຖິງບົດບາດຂອງບັນດາອົງການຈັດຕັ້ງທີ່ອີງໃສ່ຊຸມຊົນ (ລວມທັງ, ອົງການຈັດຕັ້ງທາງສັງຄົມ (CSOs), ອົງການທີ່ບໍ່ຂຶ້ນກັບລັດຖະບານ (NGO), ກຸ່ມທີ່ບໍ່ແມ່ນລັດຖະບານ ແລະ ກຸ່ມທີ່ນຳພາໂດຍຊຸມຊົນ) ທີ່ມີສ່ວນກ່ຽວຂ້ອງ ແລະ ມີຄວາມຮັບຜິດຊອບ (ໝາຍຄວາມວ່າ ພວກເຂົາມີໜ້າທີ່ປຶກສາຫາລື / ອອກຄຳຄິດເຫັນ / ຄວາມຮັບຜິດຊອບ ແລະ ເປັນຕົວແທນໃຫ້ແກ່ຜົນປະໂຫຍດຂອງຊຸມຊົນທີ່ໄດ້ຮັບຜົນ

ກະທົບ) ເປັນສ່ວນໜຶ່ງຂອງການຈັດຕັ້ງປະຕິບັດທີ່ໄດ້ນຳສະເໜີ. ຜູ້ສະໝັກຂໍທຶນ ຍັງຈະຕ້ອງໄດ້ລະບຸຖ້າມີໂອກາດທີ່ຈະເສີມຂະຫຍາຍບົດບາດ CBOs ໃຫ້ມີປະສິດທິຜົນໃນວຽກງານການຕອບໂຕ້ຕໍ່ COVID-19 ແຫ່ງຊາດ ລວມທັງຜ່ານການສະໜັບສະໜູນຈາກຊຸມຊົນທີ່ມີຄວາມສ່ຽງຫຼາຍທີ່ສຸດ, ການຕິດຕາມຊຸມຊົນ, ການສະໜັບສະໜູນດ່ຽວ ແລະ ການແກ້ໄຂບັນຫາວັກຊີນ.

## 2.5 ຂອບເຂດ, ປະສິດທິພາບ ແລະ ຄວາມຍືນຍົງຂອງທຶນຊ່ວຍເຫຼືອ

**ແນະນຳຄວາມຍາວສຳລັບການຕອບຄຳຖາມນີ້ປະກອບມີ: 2 ໜ້າ**

2.5.1 ຂໍ້ມູນກ່ຽວກັບເງື່ອນໄຂດ້ານການສະໜອງທຶນ ສຳລັບອົງປະກອບຫຼັກຂອງຂະແໜງສາທາລະນະສຸກໃນການຕອບໂຕ້ຕໍ່ COVID-19 ແລະ ການສະໜັບສະໜູນຈາກແຫຼ່ງທຶນຕ່າງໆທີ່ມີຢູ່ ເປັນສິ່ງຈຳເປັນສຳລັບກອງທຶນໂລກເພື່ອປະເມີນທຶນເພີ່ມເຕີມ, ຄວາມສົມບູນ, ຄວາມຍືນຍົງ ແລະ ຜົນຍຸດທະສາດຂອງການລົງທຶນ.

ບົດສະເໜີຂໍທຶນ C19RM ແບບຄົບຊຸດ ໂດຍສະເພາະແມ່ນຄວນອີງໃສ່ຄ່າໃຊ້ຈ່າຍ NSPRP ເຊິ່ງແຜນການຕ່າງໆບໍ່ໄດ້ຮັບການປັບປຸງດ້ານລາຄາຢ່າງເຕັມສ່ວນ, ການຄາດຄະເນໂດຍອີງໃສ່ກິດຈະກຳທີ່ວາງແຜນໄວ້ເພື່ອຫຼຸດຜ່ອນຜົນກະທົບດ້ານສຸຂະພາບຂອງໂລກລະບາດຄວນແຈ້ງໃຫ້ຊາບໃນບົດສະເໜີຂໍທຶນ. ເງື່ອນໄຂການຂໍທຶນສາມາດຄາດຄະເນໄດ້ໂດຍອີງໃສ່ໜຶ່ງໃນສາມທາງເລືອກຕໍ່ໄປນີ້:

ກ. ການຄາດຄະເນໂດຍອີງໃສ່ເສົາຄ້ຳຂອງ NSPRP ທີ່ອົງການອະນາໄມໂລກໄດ້ເຜີຍແຜ່ໃນ ເດືອນກຸມພາ ປີ 2021. ລາຍລະອຽດ ແລະ ຄຳແນະນຳຕ່າງໆທີ່ມີຢູ່ໃນເວບໄຊ້ https://apps.who.int/iris/rest/bitstreams/1335425/retrieve; ຫຼື

ຂ. ການຄາດຄະເນໂດຍອີງໃສ່ກອບໂມດູນ Modular-19 (ເບິ່ງຂໍ້ມູນອ້າງອີງຕໍ່ໄປນີ້). ກະລຸນາຮັບຊາບວ່າ C19RM ບໍ່ສະໜັບສະໜູນສ່ວນປະກອບບາງຢ່າງເຊັ່ນ ການຈັດຊື້ວັກຊີນ. ດັ່ງນັ້ນ, ໂມດູນກອງທຶນໂລກສຳລັບ C19RM ອາດຈະບໍ່ກວມເອົາການຕອບສະໜອງທັງໝົດ. ເພື່ອເຮັດໃຫ້ເຕັມຮູບແບບຄົບຊຸດດ້ານຄວາມຈຳເປັນຂອງການສະໜອງທຶນສຳລັບການຕອບໂຕ້ຕໍ່ພະຍາດລະບາດ, ຄ່າໃຊ້ຈ່າຍອົງປະກອບທີ່ກ່ຽວຂ້ອງທີ່ຍັງບໍ່ທັນໄດ້ລວມເຂົ້າໃນໂມດູນ C19RM ກໍ່ຄວນຈະເອົາລວມເຂົ້າ. ອົງປະກອບທີ່ສະໜອງໃຫ້ຢູ່ໃນແຜນວຽກໃນ 'ຮ່າງແບບຟອມຂອບເຂດການສະໜອງທຶນ' ສຳລັບການປະເມີນຊ່ອງວ່າງໄລຍະການສະໜອງທຶນໂດຍອີງໃສ່ບົນພື້ນຖານກອບໂມດູນ COVID-19 (ເບິ່ງຂໍ້ມູນອ້າງອີງຕໍ່ໄປນີ້) ສາມາດຂະຫຍາຍອອກໄປລວມເອົາຄ່າໃຊ້ຈ່າຍເຫຼົ່ານີ້; ຫຼື

ຄ. ການຄາດຄະເນໂດຍອີງຕາມໝວດຕ່າງໆສຳລັບການວາງແຜນ ແລະ ຂຶ້ນງົບປະມານພາຍໃນປະເທດຂອງຕົນ.

ອະທິບາຍໂດຍຫຍໍ້ກ່ຽວກັບທຶນທີ່ມີຢູ່ຈາກແຫຼ່ງທຶນພາຍໃນ (ແຫຼ່ງງົບປະມານຂອງລັດຖະບານ, ເງິນກູ້ຢືມ, ປະກັນສັງຄົມ, ການແກ້ໄຂໜີ້ ແລະ ການປະກອບສ່ວນຂອງພາກເອກະຊົນພາຍໃນປະເທດ) ແລະ ທຶນຊ່ວຍເຫຼືອຂອງຜູ້ໃຫ້ທຶນເພື່ອຕອບສະໜອງ COVID-19 ເຊິ່ງສະແດງໃຫ້ເຫັນວ່າບົດສະເໜີຂໍທຶນນີ້ບໍ່ໄດ້ທັບຊ້ອນກັບທຶນທີ່ໄດ້ຮັບຈາກແຫຼ່ງອື່ນໆ. ກຳນົດຊ່ອງຫວ່າງການສະໜອງທຶນທີ່ສຳຄັນສຳລັບອົງປະກອບຕ່າງໆຂອງການຕອບສະໜອງໃນຂະແໜງສາທາລະນະສຸກຕໍ່ກັບ COVID-19 ໂດຍອີງຕາມແຫຼ່ງທຶນທີ່ມີຢູ່ໃນປະຈຸບັນ. ເອກະສານສະໜັບສະໜູນສຳລັບຄວາມຕ້ອງການທຶນ ແລະ ແຫຼ່ງທຶນທີ່ມີຈາກແຫຼ່ງຂໍ້ມູນຕ່າງໆສາມາດຍື່ນເປັນເປັນເອກະສານຊ້ອນທ້າຍຂອງບົດສະເໜີຂໍທຶນ C19RM ແບບຄົບຊຸດ (ຖ້າມີ).

ອະທິບາຍແຜນການລະດົມທຶນເພີ່ມເຕີມເພື່ອແກ້ໄຂຊ່ອງຫວ່າງການສະໜອງທຶນທີ່ຍັງເຫຼືອ ລວມທັງການປະຕິບັດ ແລະ ການລິເລີ່ມເພື່ອໃຫ້ບຸລິມະສິດເພີ່ມເຕີມຂອງງົບປະມານລັດຖະບານສໍາລັບວຽກງານດ້ານສາທາລະນະສຸກ ເຊັ່ນ: ພາສີທີ່ກໍານົດໄວ້ ຫຼື ພາສີເພື່ອແກ້ໄຂໂລກລະບາດ, ເພີ່ມອັດຕາເງິນຄຸ້ມຄອງປະກັນສັງຄົມ, ພາກເອກະຊົນ ຫຼື ຄວາມຮັບຜິດຊອບປະກັນສັງຄົມຂອງບໍລິສັດ. ການປະກອບສ່ວນ ແລະ / ຫຼື ກະແສທຶນໃໝ່ຈາກທະນາຄານພັດທະນາ ແລະ ຕົວແທນຂອງຜູ້ໃຫ້ທຶນອື່ນໆ.

2.5.2 ໃນພາກນີ້, ອະທິບາຍວິທີການທີ່ຈໍາເປັນດ້ານທຶນສໍາລັບຂະແໜງສາທາລະນະສຸກເພື່ອການຕອບໂຕ້ຕໍ່ COVID-19 ໄດ້ເອົາລວມເຂົ້າໃນງົບປະມານພາຍໃນປະເທດສໍາລັບປີນີ້ ແລະ ກອບຄ່າໃຊ້ຈ່າຍປານກາງ, ຖ້າມີ. ສະຫຼຸບຫຍໍ້ກ່ຽວກັບບ້ອງທຶນງົບປະມານສໍາລັບວຽກງານສາທາລະນະສຸກໄດ້ມີການປ່ຽນແປງທາງດ້ານການເງິນ ແລະ ເປັນສ່ວນແບ່ງມາຈາກງົບປະມານລວມ.

ທຶນຊ່ວຍເຫລືອຂອງກອງທຶນໂລກສໍາລັບວຽກງານຕ້ານເອດສ໌, ວັນນະໂລກ ແລະ ໄຂ້ຍຸງ ໄດ້ຖືກອອກແບບ ແລະ ອະນຸມັດໃຫ້ພິຈາລະນາຕາມຄໍາໝັ້ນສັນຍາໃນການສົມທົບທຶນພາຍໃນປະເທດທີ່ບັນດາປະເທດຕ່າງໆໄດ້ສະໜອງໃຫ້. ດັ່ງນັ້ນ, ມັນມີຄວາມສໍາຄັນວ່າຄໍາໝັ້ນສັນຍາໃນການສົມທົບທຶນພາຍໃນປະເທດທີ່ມີຢູ່ແລ້ວແມ່ນເພື່ອຮັບປະກັນວ່າແຜນງານເຫຼົ່ານີ້ບໍ່ໄດ້ຮັບຜົນກະທົບຈາກການຕອບໂຕ້ຕໍ່ການແຜ່ລະບາດ. ຍົກໃຫ້ເຫັນວ່າປະເທດທີກໍາລັງຢູ່ໃນຂັ້ນຕອນທີ່ປະກອບສ່ວນທຶນສົມທົບພາຍໃນປະເທດຂອງຕົນຕໍ່ວຽກງານຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ ໂດຍສະເພາະຄໍາໝັ້ນສັນຍາກ່ຽວກັບການຈັດຊື້ຜະລິດຕະພັນດ້ານສາທາລະນະສຸກ, ກິດຈະກໍາຂອງປະຊາກອນຫຼັກ ແລະ ປະຫວັດການດູດຊຶມທຶນຊ່ວຍເຫຼືອກອງທຶນໂລກເຊັ່ນ: ຊັບພະຍາກອນມະນຸດ ແລະ ຄ່າໃຊ້ຈ່າຍທີ່ເກີດຂຶ້ນໃນການລົງທຶນຂອງ RSSH. ຖ້າປະເທດບໍ່ຢູ່ໃນຂັ້ນຕອນທີ່ຈະປະກອບສ່ວນທຶນສົມທົບນັ້ນ, ໃຫ້ອະທິບາຍໂດຍຫຍໍ້ກ່ຽວກັບມາດຕະການຫຼຸດຜ່ອນຜົນກະທົບຕໍ່ໂຄງການ, ລວມທັງຄວາມພະຍາຍາມໃນການລະດົມທຶນເພີ່ມເຕີມ, ໃຫ້ປະສິດທິຜົນສູງສຸດຂອງການສະໜອງທຶນທີ່ມີຢູ່ສໍາລັບສາມພະຍາດ, ແລະ / ຫຼືກະຕຸ້ນລະບົບການຕອບໂຕ້ຕໍ່ລະບົບສາທາລະນະສຸກກ່ຽວກັບໂລກລະບາດ, ທີ່ສາມາດນໍາໃຊ້ໄດ້.

2.5.3 ພະຍາຍາມອະທິບາຍໃນໃນພາກນີ້ທີ່ໄດ້ປະຕິບັດເພື່ອປັບປຸງປະສິດທິພາບຂອງຂະແໜງສາທາລະນະສຸກໃນການຕອບໂຕ້ຕໍ່ COVID-19 ແລະ ຄວາມຍືນຍົງຂອງການລົງທຶນ C19RM. ໃຫ້ອ້າງອີງເຖິງມູນຄ່າຂອງກອງທຶນໂລກ ເພື່ອມູນຄ່າໂດຍຫຍໍ້ທາງວິຊາການ 'ສໍາລັບຄໍາແນະນໍາທົ່ວໄປກ່ຽວກັບປະສິດທິພາບທີ່ມີຢູ່ນີ້.

**ປະສິດທິພາບ:** ອະທິບາຍວິທີການນໍາໃຊ້ທຶນທີ່ໄດ້ຮ້ອງຂໍນັ້ນເພື່ອປະຕິບັດໃຫ້ໄດ້ຮັບຜົນສູງສຸດ, ເນື່ອງຈາກສະພາບຂອງປະເທດ ແລະ ລັກສະນະຂອງໂລກລະບາດ (ພິຈາລະນາການລົງທຶນທີ່ໄດ້ຮັບປະຕິບັດມາແລ້ວ ແລະ ໃຫ້ໄດ້ຮັບທຶນຈາກພາຍໃນປະເທດ ແລະ ແຫຼ່ງທຶນອື່ນໆອີກ) ຊຶ່ງຄວນຈະໃຫ້ມີຕົວຢ່າງປະກອບມານໍາ (ແຕ່ບໍ່ໄດ້ຈາກັດ):

- ຄວາມພະຍາຍາມໃນການຫຼຸດຜ່ອນຕົ້ນທຶນຂອງຜົນທີ່ໄດ້ຮັບຕາມຄວາມຕ້ອງການສໍາລັບການຕອບໂຕ້ຕໍ່ COVID-19 ທີ່ມີປະສິດຕິຜົນໂດຍສະແດງໃຫ້ເຫັນວ່າ: (i) ການວິເຄາະຄວາມຈໍາເປັນ, ຄວາມເປັນໄປໄດ້ ແລະ ຄວາມຍືນຍົງຂອງຜະລິດຕະພັນສຸຂະພາບທີ່ສໍາຄັນໄດ້ຖືກດໍາເນີນເພື່ອຢັ້ງຢືນການລົງທຶນຮ່ວມກັບຫຼັກຖານທີ່ມີປະສິດທິພາບດ້ານຄ່າໃຊ້ຈ່າຍ, ຖ້າເປັນໄປໄດ້; (ii) ຮັບປະກັນຄຸນນະພາບຜະລິດຕະພັນ ແລະ ອຸປະກອນການແພດແມ່ນຖືກຈັດເຂົ້າງົບປະມານດ້ວຍລາຄາທີ່ມີຄວາມຍືນຍົງຕໍ່າສຸດ ຫລື ຈັດຊື້ດ້ວຍຮູບແບບທີ່ມີປະສິດທິຜົນທີ່ສຸດ; ແລະ / ຫຼື (iii) ຊັບພະຍາກອນມະນຸດທີ່ຕ້ອງການເພີ່ມເຕີມແມ່ນມີປະລິມານ ແລະ ຖືກຊົດເຊີຍຢ່າງຖືກຕ້ອງສອດຄ່ອງກັບຂັ້ນຕອນດ້ານຊັບພະຍາກອນມະນຸດແຫ່ງຊາດ ແລະ ລະດັບເງິນເດືອນ ເພື່ອໃຫ້ມີຄວາມຍືນຍົງ.

- ການຈັດສັນຊັບພະຍາກອນຢ່າງມີເຫດຜົນທົ່ວທາງເລືອກໃນການຕອບໂຕ້ຕໍ່COVID-19, ຂົງເຂດ ແລະ ກຸ່ມປະຊາກອນພ້ອມທັງມາດຕະການຕ່າງໆເພື່ອນໍາໃຊ້ຊັບພະຍາກອນ ແລະ ໃຫ້ການບໍລິການໃນຮູບແບບທີ່ຫັນຊັບພະຍາກອນເຫລົ່ານັ້ນໃຫ້ມີປະສິດຕິຜົນ ແລະ ມີຜົນສໍາເລັດ, ສ້າງຄວາມສົມດູນຜົນກະທົບໃນໄລຍະສັ້ນ ແລະ ຄວາມຍືນຍົງໃນໄລຍະຍາວ. ຄວາມພະຍາຍາມດັ່ງກ່າວລວມມີຄວາມສົມດູນສົມເຫດສົມຜົນລະຫວ່າງການປ້ອງກັນ ແລະ ການຕອບໂຕ້ COVID-19 ທີ່ມີຂໍ້ຈໍາກັດດ້ານຊັບພະຍາກອນ, ອອກແບບ ແລະ ຈັດຕັ້ງປະຕິບັດກົນໄກການປິ່ນປົວທີ່ມີຄ່າໃຊ້ຈ່າຍຕໍ່າ ແຕ່ມີປະສິດຕິຜົນສູງສຸດ, ນໍາໃຊ້ຍຸດທະສາດການປິ່ນປົວ ແລະ / ຫຼືພະນັກງານສາທາລະນະສຸກຊຸມຊົນເພື່ອໃຫ້ເຂົ້າເຖິງການບໍລິການທີ່ມີຄຸນນະພາບສູງສຸດ; ການໃຫ້ບໍລິການແບບຄົບວົງຈອນຂອງການຕອບໂຕ້ຕໍ່ COVID-19; ແລະ / ຫຼື ວິທີການໃຫ້ບໍລິການແບບໃໝ່ໆ ຫຼື ແບບວິທີການທີ່ຊ່ວຍເພີ່ມປະສິດທິພາບດ້ານການບໍລິການ, ຄຸນນະພາບ ແລະ ປະສິດຕິຜົນໃນລາຄາທີ່ສົມເຫດສົມຜົນ.

ການລົງທຶນຕອບໂຕ້ຕໍ່ C19RM ແບບຍືນຍົງ: ນອກເໜືອຈາກການຕອບໂຕ້ສຸກເສີນໃນປະຈຸບັນ ມັນເປັນສິ່ງສໍາຄັນທີ່ຂໍການສະໜັບສະໜູນຈາກກອງທຶນໂລກ ເພື່ອປະກອບສ່ວນເຂົ້າໃນວຽກງານຕ່າງໆເຊັ່ນ: ຊັບພະຍາກອນມະນຸດ, ໂຄງລ່າງພື້ນຖານຂອງຫ້ອງທົດລອງ ແລະ ຂົງເຂດວຽກງານລະບົບສາທາລະນະສຸກອື່ນໆ ໃຫ້ມີຄວາມຍືນຍົງຕະຫຼອດເວລາ ແລະ ມີປະສິດຕິພາບ ເພື່ອເສີມສ້າງການຄຸ້ມຄອງສາທາລະນະທົ່ວໂລກ. ອະທິບາຍໂດຍຫຍໍ້ກ່ຽວກັບວິທີການໃຊ້ຈ່າຍຄືນ ແລະ / ຫຼື ການລົງທຶນເພື່ອສະໜັບສະໜູນ RSSH ທີ່ໄດ້ຂໍການສະໜັບສະໜູນຈາກກອງທຶນໂລກຈະຖືກລວມເຂົ້າໃນງົບປະມານພາຍໃນປະເທດໃນແຕ່ລະໄລຍະໃຫ້ມີຄວາມຍືນຍົງ.

## 2.6 ເອກະສານຄັດຕິດບົດສະເໜີຂໍທຶນ C19RM ແບບຄົບຊຸດ

ສະຫຼຸບສັງລວມຂໍ້ມູນໃນພາກທີ 2 ຄົບຖ້ວນແລ້ວໃນແບບຟອມບົດສະເໜີຂໍທຶນ C19RM ເພື່ອຮັບປະກັນວ່າເອກະສານຕໍ່ໄປນີ້ ແມ່ນປະກອບສໍາເລັດຄົບຖ້ວນ ແລະ ໄດ້ຄັດຕິດມາພ້ອມນີ້:

ກ. ງົບປະມານລວມຂອງ C19RM (ລວມທັງບົດສະເໜີຂໍທຶນເພີ່ມເຕີມນອກຈາກທຶນສໍາລັບ C19RM ໃນເບື້ອງຕົ້ນ) ຄວນເຮັດໃຫ້ສໍາເລັດສໍາລັບທຸກໆໂຄງການ ພ້ອມທັງຊີ້ແຈງໃຫ້ເຫັນວ່າທຶນຊ່ວຍເຫຼືອປ້ອງໃດຈະຮັບຜິດຊອບໃນການຈັດຕັ້ງປະຕິບັດກິດຈະກໍາໃດ. ເພື່ອປະຕິບັດງົບປະມານໃຫ້ສໍາເລັດໃຫ້ອີງໃສ່ ຄໍາແນະນໍາໃນການສ້າງແບບແຜນງົບປະມານລາຍລະອຽດໃຫ້ສໍາເລັດ, ຄໍາແນະນໍາໃນການຂຶ້ນແຜນງົບປະມານທຶນຊ່ວຍເຫຼືອ ແລະ ຂໍ້ແນະນໍາດ້ານນະໂຍບາຍການດໍາເນີນງານກ່ຽວກັບຄ່າໃຊ້ຈ່າຍໃນການສະໜັບສະໜູນ / ນະໂຍບາຍການກູ້ຄືນຄ່າໃຊ້ຈ່າຍທາງອ້ອມ (ICR) ສໍາລັບອົງການທີ່ບໍ່ຂຶ້ນກັບລັດຖະບານ. **ແບບແຜນງົບປະມານດັ່ງກ່າວ ທີມງານກອງທຶນໂລກຈະເປັນຜູ້ສະໜອງໃຫ້.**

ຂ. **ການປະເມີນປະລິມານຄວາມຕ້ອງການອັນຮີບດ່ວນດ້ານຜະລິດຕະພັນສຸຂະພາບຂອງ COVID-19,** ລວມທັງການປະກອບສ່ວນ ແລະ ການຄາດຄະເນການແຈກຢາຍຜະລິດຕະພັນສຸຂະພາບ ທີ່ໄດ້ຮັບການສະໜັບສະໜູນຈາກແຫຼ່ງທຶນພາຍໃນ ແລະ ແຫຼ່ງທຶນອື່ນໆ ທີ່ໄດ້ແຈ້ງໃຫ້ຊາບໃນແບບຟອມບົດສະເໜີຂໍທຶນທີ່ຍື່ນຫາກອງທຶນໂລກ (ຖ້າມີ). ບົດສະເໜີດັ່ງກ່າວ ຄວນປະກອບມີຈໍານວນຜະລິດຕະພັນພັນສຸຂະພາບທີ່ໄດ້ຮ້ອງຂໍທີ່ມີຢູ່ໃນສາງໃນປະຈຸບັນ ແລະ ການຈັດຊື້ໃດໜຶ່ງທີ່ກໍາລັງລໍການດໍາເນີນຢູ່ ຫຼື ການຈັດຊື້ຕາມແຜນ. ຜູ້ສະໝັກສາມາດສົ່ງຂໍ້ມູນດັ່ງກ່າວນີ້ໃນຮູບແບບໃດກໍ່ໄດ້ແຕ່ຕ້ອງໄດ້ລະບຸຄວາມຕ້ອງການອັນຮີບດ່ວນ ພ້ອມທັງການການຄາດຄະເນການປະກອບສ່ວນຈາກແຕ່ລະແຫຼ່ງທຶນທີ່ມີຢູ່ໃນປະຈຸບັນ.

ສໍາລັບປະລິມານຜະລິດຕະພັນສຸຂະພາບຂອງ COVID-19, ກະລຸນາອ້າງອີງໃສ່ເຄື່ອງມືໃດໜຶ່ງ ທີ່ມີມາດຕະຖານດ້ານປະລິມານ (ຕົວຢ່າງ: ເຄື່ອງມືການພະຍາກອນອາຫານຂອງ WHO ກ່ຽວກັບ COVID-19 ຫຼື ເຄື່ອງມືທີ່ໄດ້ຕົກລົງກັນໃຊ້ໃນລະດັບຊາດ. ຖ້າບໍ່ໄດ້ມີເຄື່ອງມືໃຊ້ມາຮອດປະຈຸບັນ, ຜູ້ສະໝັກຄວນຈະເຊື່ອມໂຍງປະລິມານຜະລິດຕະພັນ

ດັ່ງກ່າວເຂົ້າໃນຂໍ້ມູນການສ້າງແບບແຜນການແຜ່ລະບາດຂອງພະຍາດແຫ່ງຊາດທີ່ມີຢູ່ ເພື່ອເປັນການສ້າງຂໍ້ມູນຄາດຄະເນໄວ້ໃນອະນາຄົດໃນປີ 2020 ໂດຍສະເພາະເປັນຂໍ້ມູນຈາກຄະນະປະສານງານຕອບໂຕ້ຕໍ່ COVID-19 ແຫ່ງຊາດ) ເພື່ອເປັນເຫດຜົນຄາດການຄວາມຕ້ອງການອີງໃສ່ NSPRP ເປັນຕົ້ນແມ່ນການປະເມີນປະລິມານຄວາມຕ້ອງການອັນຮີບດ່ວນລະດັບຊາດ ອາດຈະນຳເປັນແຜນຍ່ອຍທີ່ຈະໄດ້ຕື່ມເຂົ້າໃນ C19RM HPMT ເຊິ່ງກວມເອົາການສະໜັບສະ ໜູນຜູ້ໃຫ້ທຶນພາຍໃນ ແລະ ຜູ້ໃຫ້ທຶນອື່ນໆ.

| **ກິດຈະກຳຕົ້ນຕໍ ຂອງ COVID-19** | **ຂໍ້ມູນທີ່ຈະຕ້ອງໄດ້ມີຮ່ວມກັບບົດສະເໜີຂໍທຶນ C19RM ແບບດ່ວນ ກໍລະນີຖ້າບໍ່ມີເຄື່ອງມືທີ່ມາດຕະຖານດ້ານປະລິມານ** | |
|---|---|---|
| ການກວດ | • ຍຸດທະສາດແຫ່ງຊາດໃນການກວດ COVID-19 ລວມມີເຄື່ອງກວດ PCR ຈຳນວນໜຶ່ງ ແລະ ວິທີການກວດດ້ວຍເຄື່ອງບົ່ງມະຕິທີ່ໄດ້ຮັບຜົນໄວ Antigen Rapid Diagnostics (Ag-RDT) ແລະ ມີແຜນການເພື່ອເພີ່ມປະສິດທິພາບໃນການກວດໃນເວທີຕ່າງໆ;<br>• ຄາດຄະເນຈຳນວນການກວດສຳລັບ xx ເດືອນ;<br>• ການສົມມຸດຖານປະລິມານຂອງອຸປະກອນ / PPE ສຳລັບການກວດ ຫຼື ການຊົມໃຊ້ປະຈຳເດືອນ; | • ການເກັບຮັກສາໄວ້ພາຍໃນປະເທດ;<br>• ປະລິມານການແຈກຢາຍ;<br>• ຜະລິດຕະພັນທີ່ຈະໄດ້ຮັບການສະໜັບສະໜູນຈາກຜູ້ໃຫ້ທຶນພາຍໃນ ແລະ ຜູ້ໃຫ້ທຶນອື່ນໆໃນອະນາຄົດ ທີ່ກຳລັງວາງແຜນ ຫຼື ປະເມີນເປີເຊັນຂອງການຮ້ອງຂໍຈາກກອງທຶນໂລກ |
| ການຄວບຄຸມການຕິດເຊື້ອແລະການປ້ອງກັນ (IPC) | • ຄາດຄະເນຈຳນວນແພດປິ່ນປົວ ແລະ ປະຊາກອນທີ່ໄດ້ກວມເອົາປະມານ xx ເດືອນ;<br>• ຄາດຄະເນຈຳນວນສະຖານທີ່ບໍລິການດ້ານສາທາລະນະສຸກ ຫຼື ຊຸມຊົນທີ່ໄດ້ກວມເອົາປະມານ xxເດືອນ<br>• ການສົມມຸດຖານປະລິມານຂອງອຸປະກອນ PPE ສຳລັບ IPC ຫຼື ການຄາດຄະເນການຊົມໃຊ້ປະຈຳເດືອນ; | |
| ການປິ່ນປົວ | • ຄາດຄະເນຈຳນວນແພດທີ່ໄດ້ກວມເອົາປະມານ xx ເດືອນ<br>• ຄາດຄະເນຈຳນວນຄົນເຈັບທີ່ຖືກກວມເອົາປະມານ xx ເດືອນ ແລະ ໄດ້ໃຊ້ບໍລິການອົກຊີເຈນ / corticosteroid<br>• ການສົມມຸດຖານປະລິມານຜະລິດຕະພັນສຸຂະພາບ ຫຼື ປະເມີນການຊົມໃຊ້ປະຈຳເດືອນ<br>• ການສົມມຸດຖານປະລິມານອຸປະກອນ PPE ຫຼື ປະເມີນການຊົມໃຊ້ປະຈຳເດືອນ | |

- ເຄື່ອງມືການພະຍາກອນອາຫານຂອງ WHO ກ່ຽວກັບ COVID-19 (ESFT) ສາມາດນຳໃຊ້ເພື່ອສະໜອງ ແລະ ປ້ອນຂໍ້ມູນເຂົ້າໃນກິດຈະກຳທີ່ກ່ຽວຂ້ອງເທົ່ານັ້ນ.

ຄ. **ຍຸດທະສາດແຫ່ງຊາດໃນການກວດ COVID-19, ຖ້າມີກໍ່ຄວນຄັດຕິດມາພ້ອມ**

໅. **ຮ່າງແບບຟອມການຄຸ້ມຄອງຜະລິດຕະພັນສຸຂະພາບ C19RM** (C19RM HPMT; ເບິ່ງຂໍ້ມູນອ້າງອີງຕໍ່ໄປນີ້), ໂດຍກຳນົດລາຍລະອຽດກ່ຽວກັບທຶນຊ່ວຍເຫຼືອໂດຍພື້ນຖານທຶນຊ່ວຍເຫຼືອທຸກໆດ້ານຜະລິດຕະພັນສຸຂະພາບ ແລະ ເຕັກໂນໂລຢີດ້ານສຸຂະພາບນອກເໜືອຈາກການສົມມຸດຖານທີ່ສຳຄັນກ່ຽວກັບປະລິມານ ແລະ ຄ່າໃຊ້ຈ່າຍທີ່ຈະໄດ້ຮັບການສະໜອງທຶນຈາກກອງທຶນໂລກ. ສຳລັບແຕ່ລະຜະລິດຕະພັນສຸຂະພາບຈະມີລາຍການທີ່ລະບຸວ່າ: ເຕັກໂນ

ໂລຍີ ແລະ ການບໍລິການ, ຄາດຄະເນປະລິມານການຊົມໃຊ້ (ຖ້າວ່າໄດ້ຊົມໃຊ້ເລື້ອຍໆ) ທີ່ຈະໄດ້ຮັບການຈັດຊື້ໃນແຕ່ລະປີໃນຊ່ວງໄລຍະການຈັດຕັ້ງປະຕິບັດ, ປະເມີນລາຄາຫືອໜ່ວຍອ້າງອີງ ແລະ ການຄຸ້ມຄອງລາຄາການຈັດຊື້ ແລະ ການສະຕອບໜອງ (PSM) ທີ່ກ່ຽວຂ້ອງກັບການຄຸ້ມຄອງຜະລິດຕະພັນໃນວຽກງານການປິ່ນປົວ, ການບົ່ງມະຕິ, ການດູແລ ແລະ ການປ້ອງກັນ.

C19RM HPMT ຖືກອອກແບບມາເພື່ອເກັບກຳທຸກຂໍ້ມູນທີ່ສຳຄັນໃນການນຳໃຊ້ເປັນການສົມມຸດຖານປະລິມານທີ່ກ່ຽວຂ້ອງກັບການຈັດຊື້ຜະລິດຕະພັນສຸຂະພາບ, ການບໍລິການ ແລະ ຄ່າໃຊ້ຈ່າຍໃນການຄຸ້ມຄອງ. ດັ່ງທີ່ໄດ້ກ່າວໃນ C19RM HPMT, ຂໍ້ມູນເພີ່ມເຕີມໃດໜຶ່ງທີ່ກ່ຽວຂ້ອງ (ເຊັ່ນ: ຍຸດທະສາດແຫ່ງຊາດໃນການກວດ, ການປິ່ນປົວ ແລະ ສູດຄິດໄລ່, ບົດລາຍງານແຫ່ງຊາດກ່ຽວກັບປະລິມານການຄາດຄະເນ, ບົດລາຍງານຜະລິດຕະພັນໃນສາງ ແລະ ແຜນການແຈກຢາຍ ໂດຍການນຳໃຊ້ເຕັກໂນໂລຢີດ້ານສາທາລະນະສຸກ) ເຮັດໃຫ້ສາມາດສິ່ງເປັນຮູບແບບທີ່ເຫັນວ່າເໝາະສົມກັບຜູ້ສະໝັກແຕ່ລະທ່ານ.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບວິທີການຕື່ມຂໍ້ມູນໃສ່ໃນຮ່າງແບບຟອມ C19RM HPMT, ກະລຸນາເບິ່ງຕາມຄຳແນະນຳໃນຮ່າງແບບຟອມ ແລະ ໃຫ້ຮັບຊາບວ່າຜະລິດຕະພັນສຸຂະພາບ ແລະ ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງ (ຄ່າບໍລິການຕົວແທນການຈັດຊື້, ຄ່າຂົນສົ່ງແລະປະກັນໄພ, ຄ່າທຳນຽມ QA / QC, ຄ່າທຳນຽມພາສີ, ຄ່າສາງ ແລະ ຄ່າເກັບຮັກສາພາຍໃນປະເທດ, ຄ່າແຈກຢາຍຢູ່ພາຍໃນປະເທດ ແລະ ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບ PSM ອື່ນໆ. ຄ່າໃຊ້ຈ່າຍທັງໝົດແມ່ນຢູ່ພາຍໃຕ້ໝວດຄ່າໃຊ້ຈ່າຍທີ 7) ຄວນເອົາລວມເຂົ້າໃນຂໍ້ (ກ) COVID-19 ໂດຍກົງ; ແລະ ຂໍ້ (ຂ) ການຫຼຸດຜ່ອນຜົນກະທົບຈາກ COVID-19 ກ່ຽວກັບການໃຫ້ບໍລິການວຽກງານຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ. ກິດຈະກຳການເສີມສ້າງລະບົບການຄຸ້ມຄອງຜະລິດຕະພັນສຸຂະພາບ (ເຊັ່ນ: ລະບົບການຄຸ້ມຄອງ HPM/SC, ລະບຽບການ, ຄວາມສາມາດໃນການເກັບຮັກສາແລະແຈກຢາຍ ແລະ ການຄຸ້ມຄອງສິ່ງເສດເຫຼືອ) ຄວນເອົາລວມເຂົ້າໃນຂໍ້ (ຄ) ການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບສາທາລະນະສຸກຊຸມຊົນ. **The C19RM HPMT ແມ່ນເງື່ອນໄຂຈຳເປັນສຳລັບຜູ້ສະໝັກທຸກຄົນ.**

ຈ. ຮ່າງຂອບເຂດດ້ານການສະໜອງທຶນ (ຈຳເປັນສຳລັບວິທີການຍື່ນສະເໜີຂໍທຶນແບບຄົບຊຸດ) - ຂໍ້ມູນທີ່ສະໜອງໃນຮ່າງແບບຟອມຂໍທຶນ ຄວນສອດຄ່ອງກັບຄຳຕອບຂອງຜູ້ສະໝັກຕໍ່ກັບຄຳຖາມ 2.5.1 ຂອງບົດສະເໜີຂໍທຶນ C19RM ແບບຄົບຊຸດ ຄືທີ່ໄດ້ກ່າວມາຂ້າງເທິງ.

ຜູ້ສະໝັກຕ້ອງໃຊ້ຮ່າງແບບຟອມຂໍທຶນ ເພື່ອສະໜອງຂໍ້ມູນດ້ານການເງິນທີ່ກ່ຽວຂ້ອງກັບການຕອບໂຕ້ຕໍ່ COVID-19 ແຫ່ງຊາດ ຊຶ່ງລວມມີດັ່ງລຸ່ມນີ້:

i. ໜ້າປົກເອກະສານທີ່ເກັບກຳຂໍ້ມູນລະບຸຜູ້ສະໝັກຂໍທຶນ ແລະ ຂໍ້ມູນເບື້ອງຫລັງທີ່ເອົາໃສ່ໄວ້ທາງດ້ານຫົວຂອງເອກະສານແຜ່ນວຽກອື່ນໆ;
ii. 'ພາບລວມຊ່ອງວ່າງດ້ານການເງິນ 'ແຜນວຽກທີ່ກຳນົດຄວາມຕ້ອງການດ້ານການເງິນ, ແຫຼ່ງທຶນທີ່ມີ ແລະ ຊ່ອງຫວ່າງທາງການເງິນໃນລະດັບໂຄງການ;
iii. 'ຊ່ອງຫວ່າງທາງດ້ານການເງິນລະອຽດ' ເພື່ອໃຫ້ໄດ້ຮູບພາບທີ່ສະແດງເຖິງທຶນທີ່ມີຢູ່ໃນປະຈຸບັນ ແລະ ຊ່ອງຫວ່າງສຳລັບອົງປະກອບທີ່ສຳຄັນຂອງການຕອບໂຕ້ຕໍ່ສາທາລະນະ COVID-19.

ສ. ການຮັບຮອງຈາກ CCM ສຳລັບບົດສະເໜີຂໍທຶນ C19RM ແບບຄົບຊຸດ. ກອງທຶນໂລກຮຽກຮ້ອງໃຫ້ມີຫຼັກຖານຢັ້ງຢືນການຮັບຮອງເອົາບົດສະເໜີຂໍທຶນ C19RM ແບບຄົບຊຸດ ສະບັບຫຼ້າສຸດໂດຍສະມາຊິກສົມບູນທັງໝົດ ແລະ ສະມາຊິກສຳຮອງຂອງຄະນະກຳມະການປະສານງານກອງທຶນໂລກ (CCM) ຫຼື ຜູ້ທີ່ໄດ້ຮັບມອບໝາຍໃຫ້ເປັນຕົວແທນທັງໝົດ ກໍ່ສາມາດຮັບຮອງໄດ້ເຊັ່ນດຽວກັນໃນກໍລະນີສະມາຊິກ CCM ບໍ່ສະດວກໃນການເຂົ້າຮ່ວມການ

ຮັບຮອງດັ່ງກ່າວ. ສຳລັບສະມາຊິກທ່ານໃດບໍ່ສະດວກໃນການເຊັນຮັບຮອງບົດສະເໜີຂໍທຶນ C19RM ແບບຄົບຊຸດ ທ່ານອາດຈະຮັບຮອງສິ່ງຜ່ານທາງອີເມວແຈ້ງໄປຍັງກອງເລຂາ CCM  ເພື່ອສົ່ງຕໍ່ໄປຫາກອງທຶນໂລກ. ໃນກໍລະນີທີ່ ສະມາຊິກ CCM  ທ່ານໃດບໍ່ສາມາດທີ່ຈະຮັບຮອງເອົາບົດສະເໜີຂໍທຶນດັ່ງກ່າວນີ້ ສະມາຊິກທ່ານນັ້ນຄວນຈະແຈ້ງ ເປັນລາຍລັກອັກສອນຕໍ່ກອງທຶນໂລກ (ສົ່ງເຖິງ C19RM@theglobalfund.org) ໂດຍແຈ້ງເຫດຜົນທີ່ບໍ່ສາມາດ ຮັບຮອງເອົາບົດສະເໜີຂໍທຶນດັ່ງກ່າວ ແລະ ກອງທຶນໂລກກໍ່ສາມາດເຂົ້າໃຈໄດ້ວ່າ ສະມາຊິກທ່ານນັ້ນມາຈາກ ພາກສ່ວນໃດຂອງຄະນະກຳມະການ CCM.

ສ. ຫຼັກຖານຂອງການຮັບຮອງເອົາບົດສະເໜີຂໍທຶນ C19RM ແບບຄົບຊຸດ ໂດຍຄະນະກຳມະການປະສານງານແຫ່ງ ຊາດ ເພື່ອຕອບໂຕ້ຕໍ່ ແລະ ສະກັດກັ້ນ COVID-19 ອາດຈະສົ່ງອີເມວໃນການຮັບຮອງໃຫ້ກອງເລຂາ CCM ເພື່ອ ສົ່ງຕໍ່ໄປຫາກອງທຶນໂລກເພື່ອເປັນເອກະສານຄັດຕິດ.

ຊ. ສຳເນົາແຜນຍຸດທະສາດແຫ່ງຊາດໃນການກະກຽມຄວາມພ້ອມຕອບໂຕ້ຕໍ່ COVID-19 ແລະ ງົບປະມານສຳລັບປີ 2021

ຍ. ແຜນການຫຼຸດຜ່ອນວຽກງານຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ (ຖ້າມີ)

ດ. ລາຍຊື່ຜູ້ໃຫ້ຄຳແນະນຳຈາກການຈັດຕັ້ງທາງສັງຄົມ ໃຫ້ເອົາລວມເຂົ້າໃນບົດສະເໜີຂໍທຶນ C19RM ແບບຄົບຊຸດ.